ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສສສ໐໐໐໙໙໙

ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ

ສະມາຄົມນັກທຸລະກິດໜຸ່ມແຫ່ງຊາດລາວ

# ກົດລະບຽບ

# ຂອງສະມາຄົມນັກທຸລະກິດໜຸ່ມແຫ່ງຊາດລາວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ

ສະມາຄົມນັກທຸລະກິດໜຸ່ມແຫ່ງຊາດລາວ

ເລກທີ:..065...../ສທໜຊ

# ກົດລະບຽບ
# ຂອງສະມາຄົມນັກທຸລະກິດໜຸ່ມແຫ່ງຊາດລາວ

## ໝວດທີ I ພາກສະເໜີ

### ມາດຕາ 01 : ທີ່ຕັ້ງ ແລະ ຊື່ຂອງສະມາຄົມ ນັກທຸລະກິດໜຸ່ມແຫ່ງຊາດ

ສະມາຄົມນັກທຸລະກິດໜຸ່ມແຫ່ງຊາດລາວ ເປັນອົງການຈັດຕັ້ງສັງຄົມໜຶ່ງ ເຄື່ອນໄຫວຕາມລັດຖະທຳມະນູນ ແລະ ກົດໝາຍແຫ່ງ ສປປ ລາວ ພາຍໃຕ້ການຊີ້ນຳຂອງສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ມີຖານະທຽບເທົ່າບັນດາອົງການຈັດຕັ້ງສັງຄົມຂັ້ນສູນກາງທີ່ຂຶ້ນກັບກະຊວງ, ອົງການ.

ສະມາຄົມນັກທຸລະກິດໜຸ່ມແຫ່ງຊາດລາວ ຂຽນຫຍໍ້ "ສທໜຊ" ມີຊື່ເປັນພາສາອັງກິດວ່າ YOUNG ENTREPRENEUR ASSOCIATION OF LAO P.D.R (YEAL)

### ມາດຕາ 02 : ຈຸດປະສົງ ແລະ ເປົ້າໝາຍຂອງ ສທໜຊ

ການຈັດຕັ້ງຂອງ ສທໜຊ ມີບົດບາດຊ່ວຍ ຄສປປລ ປຸກລະດົມເຕົ້າໂຮມ ແລະ ສຶກສາອົບຮົມບັນດາຊາວໜຸ່ມທີ່ປະກອບອາຊີບທຸລະກິດ ຢູ່ໃນພາກສ່ວນເສດຖະກິດ ສາມັກຄີກັນຢູ່ອ້ອມຂ້າງພັກ, ເພື່ອປະຕິບັດແນວທາງນະໂຍບາຍຂອງພັກ ແລະ ກົດລະບຽບຂອງລັດຖະບານ. ປະກອບສ່ວນເຂົ້າໃນການສ້າງວຽກເຮັດງານທຳ ແລະ ສ້າງລາຍໄດ້ໃຫ້ແກ່ຊາວໜຸ່ມບັນດາເຜົ່າ ໃຫ້ນັບມື້ນັບຫຼາຍຂຶ້ນ. ເປັນຕົວແທນໃຫ້ແກ່ ຊປປລ ໃນການພົວພັນ, ຮ່ວມມື ແລະ ແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານໃນດ້ານທຸລະກິດ ຂອງນັກທຸລະກິດຂອງບັນດາປະເທດເພື່ອນມິດ ໃນພາກພື້ນ ແລະ ໃນໂລກ.

### ມາດຕາ 03 : ພາລະບົດບາດ

ສະມາຄົມນັກທຸລະກິດໜຸ່ມແຫ່ງຊາດລາວ ມີພາລະບົດບາດເປັນເສນາທິການໃຫ້ແກ່ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ກໍ່ຄືພັກ ແລະ ລັດຖະບານ ໃນການເຕົ້າໂຮມຄວາມສາມັກຄີ, ສຶກສາອົບຮົມ, ສ້າງ, ປັບປຸງການຈັດຕັ້ງສະມາຄົມນັກທຸລະກິດໜຸ່ມຂັ້ນແຂວງ, ຂັ້ນນະຄອນຫຼວງ, ເມືອງ ແລະ ຊຸກຍູ້ສົ່ງເສີມຜູ້ປະກອບການທຸກສາຂາອາຊີບໃຫ້ມີຄວາມເຂັ້ມແຂງ, ສ້າງຊາວໜຸ່ມໃຫ້ກາຍເປັນຜູ້ປະກອບການໃໝ່, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກນັກທຸລະກິດໜຸ່ມ ເພື່ອເປັນກຳລັງແຮງປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໂດຍສະເພາະການສ້າງວຽກເຮັດງານທຳໃຫ້ປະຊາຊົນ ບັນດາເຜົ່າ ແລະ ສົ່ງເສີມຜູ້ປະກອບການໜຸ່ມ.

**ມາດຕາ 04 : ຂັ້ນຄຸ້ມຄອງບໍລິຫານ**

ສະມາຄົມ ນັກທຸລະກິດໜຸ່ມແຫ່ງຊາດລາວ ມີສໍານັກງານຕັ້ງຢູ່ ນະຄອນຫຼວງວຽງຈັນແຫ່ງ ສປປ ລາວ ເປັນຜູ້ຄຸ້ມຄອງສາຂາຂອງ ສທໜ ຢູ່ແຂວງຕ່າງໆ ແລະ ຢູ່ຕ່າງປະເທດ, ຂັ້ນແຂວງ ເປັນຜູ້ຄຸ້ມຄອງຂັ້ນເມືອງຕາມລໍາດັບ ໂດຍແບ່ງຊື່ອອກຕາມຂັ້ນການຄຸ້ມຄອງເຊັ່ນ:

- ສະມາຄົມ ນັກທຸລະກິດໜຸ່ມຂັ້ນສູນກາງ
- ສະມາຄົມ ນັກທຸລະກິດໜຸ່ມຂັ້ນ ນະຄອນຫຼວງວຽງຈັນ
- ສະມາຄົມ ນັກທຸລະກິດໜຸ່ມຂັ້ນແຂວງ
- ສະມາຄົມ ນັກທຸລະກິດໜຸ່ມຂັ້ນເມືອງ

**ມາດຕາ 05 : ເຄື່ອງໝາຍ ແລະ ກາປະທັບ**

ສະມາຄົມ ນັກທຸລະກິດໜຸ່ມແຫ່ງຊາດ ມີເຄື່ອງໝາຍເປັນເອກະລັກຂອງຕົນເອງ ໂດຍໃຫ້ໃຊ້ເຄື່ອງໝາຍໄລໂກ້ດຽວທົ່ວປະເທດ ໃຫ້ປ່ຽນແຕ່ຊື່ແຕ່ລະຂັ້ນໃສ່ແທນ, ຄໍາວ່າແຫ່ງຊາດ ເປັນ ແຂວງ,......ເມືອງ,.....; ສະມາຄົມນັກທຸລະກິດໜຸ່ມຂັ້ນປະເທດ ຂັ້ນນະຄອນຫຼວງ - ຂັ້ນແຂວງ, ຂັ້ນເມືອງ ລວມເຖິງສາຂາທີ່ຢູ່ຕ່າງປະເທດມີກາປະທັບຂອງຕົນ ເພື່ອໃຊ້ໃນການເຄື່ອນໄຫວວຽກງານຂອງຕົນ, ການນໍາໃຊ້ແມ່ນເຂັ້ມງວດ ແລະ ຖືກຕ້ອງກັບເນື້ອໃນຈິດໃຈຂອງລະບຽບສະບັບນີ້.

## ໝວດທີ II
## ວ່າດ້ວຍສິດ ແລະ ໜ້າທີ່ຂອງ ສທໜຊ

**ມາດຕາ 06 : ສິດຂອງ ສະມາຄົມ ນັກທຸລະກິດໜຸ່ມແຫ່ງຊາດ**

ສະມາຄົມນັກທຸລະກິດໜຸ່ມແຫ່ງຊາດລາວ ມີສິດດັ່ງນີ້:

1. ຄົ້ນຄວ້າປະກອບຄໍາຄິດຄໍາເຫັນໃສ່ເອກະສານ ຫຼື ໃນກອງປະຊຸມຂອງພັກ, ລັດຖະບານ ແລະ ພາກສ່ວນທີ່ກ່ຽວຂ້ອງ ທີ່ສະມາຄົມນັກທຸລະກິດໜຸ່ມຖືກເຊີນເຂົ້າຮ່ວມ.
2. ສະໝັກຮັບເລືອກຕັ້ງ, ເປັນສະມາຊິກ, ເປັນປະທານຂອງອົງການຈັດຕັ້ງຕ່າງໆທັງພາຍໃນ ແລະ ຕ່າງປະເທດຕາມການສະເໜີ ແລະ ເຫັນດີຂອງອົງການທີ່ກ່ຽວຂ້ອງ.
3. ພົວພັນນໍາອົງການຈັດຕັ້ງຂອງພັກ, ລັດ, ອົງການຈັດຕັ້ງມະຫາຊົນ ແລະ ເຈລະຈາກັບບັນດາພາກສ່ວນເສດຖະກິດ, ບັນດາອົງການທີ່ກ່ຽວຂ້ອງ ເພື່ອຜົນປະໂຫຍດລວມຂອງສະມາຄົມນັກທຸລະກິດໜຸ່ມແຫ່ງຊາດລາວ ທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.
4. ເປັນຕົວແທນໃຫ້ແກ່ສະມາຊິກໃນການນໍາເອົາຄໍາຄິດເຫັນ ແລະ ຂໍ້ສະເໜີຕ່າງໆຂອງສະມາຊິກ ເພື່ອສະເໜີໃຫ້ແກ່ການຈັດຕັ້ງພັກ-ລັດ ເພື່ອພິຈາລະນາ.
5. ພິຈາລະນາ, ສະເໜີ, ຊຸກຍູ້, ຕິດຕາມ, ກວດກາການສ້າງຕັ້ງ, ການປັບປຸງ ແລະ ການຍຸບເລີກສະມາຄົມນັກທຸລະກິດໜຸ່ມແຂວງ, ນະຄອນຫຼວງ, ເມືອງ ຕາມຂອບເຂດສິດທີ່ກໍານົດໄວ້.
6. ສະເໜີ ຂໍອະນຸມັດຈາກສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເພື່ອໃຫ້ສະມາຊິກ, ພະນັກງານຂອງສະມາຄົມນັກທຸລະກິດໜຸ່ມແຫ່ງຊາດລາວ ໄປເຄື່ອນໄຫວວຽກງານຢູ່ຕ່າງປະເທດ ຕາມການສະເໜີຂອງພາກສ່ວນກ່ຽວຂ້ອງ.
7. ຮັບທຶນການຊ່ວຍເຫຼືອລ້າ ແລະ ທຶນກູ້ຢືມຈາກລັດຖະບານ, ອົງການຈັດຕັ້ງພາຍໃນ, ອົງການຈັດຕັ້ງສາກົນ, ສ່ວນບຸກຄົນ ແລະ ນິຕິບຸກຄົນໂດຍກົງ ທີ່ຖືກຕ້ອງຕາມກົດໝາຍ, ລະບຽບການ.

8. ສ້າງກອງທຶນຂອງຕົນເພື່ອຊຸກຍູ້ ສະໜັບສະໜຸນການເຄື່ອນໄຫວທຸລະກິດຂອງສະມາຊິກ ແລະ ເພື່ອຈຸດປະສົງດ້ານການພັດທະນາເສດຖະກິດ-ສັງຄົມ.
9. ເຄື່ອນໄຫວ, ລົງທຶນໃນທຸກໂຄງການ ແລະ ສ້າງຕັ້ງບໍລິສັດຫຸ້ນສ່ວນ ທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.
10. ມີສິດອື່ນໆຕາມທີ່ໄດ້ກຳນົດໃນກົດໝາຍ.

**ມາດຕາ 07 : ໜ້າທີ່ຂອງ ສະມາຄົມ ນັກທຸລະກິດໜຸ່ມແຫ່ງຊາດລາວ**

ສະມາຄົມນັກທຸລະກິດໜຸ່ມແຫ່ງຊາດລາວ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າເຊື່ອມຊຶມແນວທາງຂອງພັກ ແລະ ນະໂຍບາຍ, ກົດໝາຍ, ລະບຽບການ, ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ ໃນແຕ່ລະໄລຍະ, ພາລະບົດບາດຂອງສະມາຄົມນັກທຸລະກິດໜຸ່ມແຫ່ງຊາດລາວ ເພື່ອຜັນຂະຫຍາຍເປັນແຜນການ, ແຜນງານ ແລະ ໂຄງການລະອຽດ.
2. ຄົ້ນຄວ້າ, ສ້າງນະໂຍບາຍແຜນຍຸດທະສາດ, ນິຕິກຳກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະມາຄົມນັກທຸລະກິດໜຸ່ມແຫ່ງຊາດລາວ ຕາມລະບຽບການ.
3. ສຶກສາອົບຮົມການເມືອງແນວຄິດໃຫ້ແກ່ສະມາຊິກ ມີຄວາມເຊື່ອໝັ້ນຕໍ່ການນຳຂອງພັກ, ມີສະຕິເຄົາລົບ ແລະ ປະຕິບັດກົດໝາຍຂອງລັດ ໃຫ້ກາຍເປັນນັກທຸລະກິດໜຸ່ມທີ່ດີເດັ່ນ.
4. ສົ່ງເສີມຫົວຄິດປະດິດສ້າງ ແລະ ຜົນການປະດິດສ້າງໃໝ່ຂອງນັກທຸລະກິດໜຸ່ມ ເຂົ້າໃນການພັດທະນາປະເທດຊາດ, ສ້າງຄວາມເຂັ້ມແຂງຢ່າງຮອບດ້ານໃຫ້ແກ່ສະມາຊິກເປັນຕົ້ນ; ສ້າງສູນຝຶກອົບຮົມ, ການຮ່ວມມື, ບໍລິການທຸລະກິດຄົບວົງຈອນ, ແລກປ່ຽນຂໍ້ມູນຂ່າວສານ, ຈັດສຳມະນາ, ຈັດທັດສະນະສຶກສາ, ຈັດວາງສະແດງສິນຄ້າ, ການແຂ່ງຂັນປະກວດນັກທຸລະກິດໜຸ່ມດີເດັ່ນ ແລະ ງານພົບປະທາງດ້ານທຸລະກິດ.
5. ປົກປ້ອງສິດ, ຜົນປະໂຫຍດອັນຊອບທຳຂອງສະມາຊິກ ແລະ ຜູ້ອອກແຮງງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ.
6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການສ້າງ ແລະ ປັບປຸງສະມາຄົມນັກທຸລະກິດໜຸ່ມແຕ່ລະຂັ້ນ ໃຫ້ມີຄວາມເຂັ້ມແຂງ ແລະ ໜັກແໜ້ນ.
7. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສ້າງນັກທຸລະກິດໜຸ່ມ ແລະ ປຸກລະດົມຜູ້ປະກອບການລຸ້ນໃໝ່ (Start Up) ເຂົ້າເປັນສະມາຊິກສະມາຄົມນັກທຸລະກິດໜຸ່ມແຕ່ລະຂັ້ນ ໃນຂອງເຂດທົ່ວປະເທດໃຫ້ນັບມື້ນັບຫຼາຍຂຶ້ນ.
8. ສ້າງ ແລະ ສົ່ງເສີມແຕ່ລະວິສາຫະກິດ, ຂະໜາດນ້ອຍ-ຂະໜາດກາງ (MSME), ທຸລະກິດຂະໜາດໃຫຍ່ (Large Enterprise) ຢູ່ພາຍໃນ ແລະ ຕ່າງປະເທດໃຫ້ມີຄວາມເຂັ້ມແຂງ.
9. ສະໜັບສະໜູນ ແລະ ສ້າງເງື່ອນໄຂໃຫ້ສະມາຊິກໃນການເຂົ້າເຖິງແຫຼ່ງທຶນ ເພື່ອເປັນການຂະຫຍາຍທຸລະກິດ ແລະ ອື່ນໆ.
10. ສົ່ງເສີມການດຳເນີນທຸລະກິດໃຫ້ແກ່ສະມາຊິກຢູ່ພາຍໃນ ແລະ ຕ່າງປະເທດ, ສ້າງໃຫ້ເກີດມີການຮ່ວມມື, ການເປັນຄູ່ຮ່ວມທຸລະກິດ.
11. ປະກອບສ່ວນເຂົ້າໃນການສຶກສາອົບຮົມດ້ານຕ່າງໆ ໃຫ້ຊາວໜຸ່ມທີ່ປະກອບອາຊີບ ຢູ່ໃນຄວາມຮັບຜິດຊອບ ຂອງສະມາຊິກນັກທຸລະກິດໜຸ່ມແຫ່ງຊາດລາວທຸກໆຄົນ.
12. ມີໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ III
## ໂຄງປະກອບກົງຈັກການຈັດຕັ້ງ ສະມາຄົມ ນັກທຸລະກິດໜຸ່ມແຫ່ງຊາດລາວ

**ມາດຕາ 08 : ໂຄງປະກອບດ້ານບຸກຄະລາກອນ**

1. ສະພາທີ່ປຶກສາ ປະກອບມີ 2 ພາກສ່ວນ:
   - ສະພາກິດຕິມາສັກ ທີ່ຮຽກເຊີນຈາກອົງການອື່ນບໍ່ປະຈຳ ຈຳນວນ 3 ທ່ານຂຶ້ນໄປ.
   - ສະພາທີ່ປຶກສາປະຈຳ ແມ່ນຄັດເລືອກ ແລະ ເຊື້ອເຊີນເອົາບັນດາຄະນະບໍລິຫານຊຸດເກົ່າ ແລະ ສະມາຊິກຊຸດເກົ່າທີ່ມີຜົນງານ ສທໜ ມີຈຳນວນ 3 ທ່ານຂຶ້ນໄປ.
2. ຄະນະປະທານຈຳນວນ 13 ທ່ານຂຶ້ນໄປ (ປະທານ 1 ທ່ານ, ຮອງປະທານ 12 ທ່ານ ຫຼື ຫຼາຍກວ່າ).
3. ຄະນະບໍລິຫານງານ ສທໜ ມີ 41 ທ່ານຂຶ້ນໄປ (ໃນນີ້ ປະທານ ສທໜ ແຕ່ລະແຂວງຈະຖືກປະກອບເຂົ້າເປັນ ຄະນະກຳມະການ ບໍລິຫານງານແຫ່ງຊາດ ໂດຍອັດຕະໂນມັດ).
4. ພະນັກງານປະຈຳຫ້ອງການແມ່ນບຸກຄົນທີ່ສັນຫາ ແລະ ຄັດເລືອກຈາກພາຍນອກ ໂດຍຄະນະບໍລິຫານງານ ເພື່ອມາເຮັດວຽກຕົວຈິງ ເຊິ່ງເປັນໜ່ວຍປະສານງານບໍລິຫານຄຸ້ມຄອງ, ບັນຊີ-ການເງິນ ແລະ ວຽກງານເລຂານຸການຂອງ ສທໜ ຈຳນວນບໍ່ຕໍ່າກວ່າ 2 ຄົນຂຶ້ນໄປ.
5. ສະມາຊິກປະກອບມີດັ່ງນີ້: ສະມາຊິກສາມັນ, ສະມາຊິກວິສາມັນ, ສະມາຊິກສະໜັບສະໜູນ, ສະມາຊິກກິດຕິມາສັກ.

**ມາດຕາ 09 : ໂຄງປະກອບຂອງວຽກງານ**

ອົງປະກອບຂອງວຽກງານໄດ້ແບ່ງອອກເປັນ 12 ພະແນກທຸລະກິດ, 1 ສູນພັດທະນາຜູ້ປະກອບການ ໂດຍມີລາຍລະອຽດດັ່ງຕໍ່ໄປນີ້:

- ຫ້ອງການ ແລະ ນິຕິກຳ
- ພະແນກທຸລະກິດ ກະສິກຳ ແລະ ຫັດຖະກຳ
- ພະແນກທຸລະກິດ ໂຮງແຮມ ແລະ ການທ່ອງທ່ຽວ
- ພະແນກທຸລະກິດ ພະລັງງານ ແລະ ບໍ່ແຮ່
- ພະແນກທຸລະກິດ ການຄ້າ ແລະ ອຸດສາຫະກຳ
- ພະແນກທຸລະກິດ ສຳຫຼວດອອກແບບ ແລະ ກໍ່ສ້າງ
- ພະແນກທຸລະກິດ ຂົນສົ່ງ
- ພະແນກທຸລະກິດ ສະຖາບັນການເງິນ
- ພະແນກທຸລະກິດ ການສຶກສາ
- ພະແນກທຸລະກິດ ອະສັງຫາລິມະຊັບ
- ພະແນກທຸລະກິດ ສຸຂະພາບ ແລະ ຄວາມງາມ
- ພະແນກເຕັກໂນໂລຊີ ແລະ ສື່ສານມວນຊົນ
- ສູນພັດທະນາຜູ້ປະກອບການໜຸ່ມ

**ມາດຕາ 10 : ຂອບເຂດວຽກງານ ແລະ ພາລະບົດບາດຂອງແຕ່ລະພາກສ່ວນ**

**1. ພະແນກຄຸ້ມຄອງ ແລະ ສົ່ງເສີມສະມາຊິກ**

**ກ. ພາລະບົດບາດ**

- ແມ່ນໄດ້ຮັບການຊີ້ນຳ ແລະ ບໍລິຫານງານໂດຍກົງຂອງຮອງປະທານ ແລະ ຄະນະບໍລິຫານງານ ສທໝ ຈຳນວນ 2 ທ່ານຂຶ້ນໄປ.
- ຄະນະຮັບຜິດຊອບມີສິດ ແລະ ພາລະບົດບາດໃນການຄົ້ນຄວ້າ, ຄົ້ນຄິດຊອກຫາແນວທາງ, ວິທີທາງ ແລະ ສ້າງແຜນພັດທະນາຄຸ້ມຄອງ ແລ້ວນຳສະເໜີປະທານເພື່ອເປີດກອງປະຊຸມຮັບຮອງເອົາ ແລະ ນຳໄປຈັດຕັ້ງປະຕິບັດໃຫ້ປະສິບຜົນສຳເລັດຢ່າງຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍຂອງ ສປປ ລາວ.

**ຂ. ຂອບເຂດຂອງວຽກງານ**

- ສ້າງເອກະສານນິຕິກຳຕ່າງໆເຊັ່ນວ່າ: ກົດລະບຽບສະມາຄົມ, ໃບສະໝັກ.
- ບັນຊີລາຍຊື່ລະອຽດຂອງສະມາຊິກ.
- ເກັບກຳສະພາບລວມຂອງສະມາຊິກ ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຂໍ້ສະເໜີຕ່າງໆຂອງສະມາຊິກທົ່ວປະເທດ.
- ແບ່ງເປັນກຸ່ມຕາມຂະແໜງການຂອງທຸລະກິດສະມາຊິກ.
- ຕິດຕາມແຈ້ງການໃຫ້ສະມາຊິກ, ດານເສຍຊີວິດ, ການໄປມາຫາສູ່ ລວມທັງໂຮມທຸລະກິດຮ່ວມກັນໄດ້.
- ສ້າງຂະບວນການດ້ານກິລາ, ສິລະປະລະຫວ່າງນັກທຸລະກິດດ້ວຍກັນ ແລະ ພາກສ່ວນອື່ນໆ.
- ສົ່ງເສີມ, ຊົມເຊີຍ, ຍ້ອງຍໍສະມາຊິກທີ່ມີຄວາມຫ້າວຫັນ ໃນການປະກອບສ່ວນວຽກງານສັງຄົມ.
- ສ້າງແຜນການຂະຫຍາຍສະມາຊິກໃໝ່ໃຫ້ໄດ້ທົ່ວປະເທດ.
- ສ້າງອົງການຈັດຕັ້ງມະຫາຊົນຕ່າງໆ ຕາມຄວາມສາມາດ.
- ຈັດງານວາງສະແດງຜະລິດຕະພັນ-ກິດຈະກຳຕ່າງໆ.

**2. ພະແນກພັດທະນາ ແລະ ສົ່ງເສີມທຸລະກິດ**

**ກ. ພາລະບົດບາດ**

- ແມ່ນໄດ້ຮັບການຊີ້ນຳ ແລະ ບໍລິຫານງານໂດຍກົງຈາກຮອງປະທານ ແລະ ຄະນະບໍລິຫານງານ ສທໝ ຈຳນວນ 2 ທ່ານຂຶ້ນໄປ.
- ຄະນະຮັບຜິດຊອບມີສິດ ແລະ ພາລະບົດບາດໃນການຄົ້ນຄວ້າ, ຄົ້ນຄິດຊອບຫາແນວທາງ, ວິຖີທາງ ແລະ ສ້າງແຜນພັດທະນາຄຸ້ມຄອງ ແລ້ວນຳໄປສະເໜີປະທານ ເພື່ອເປີດກອງປະຊຸມຮັບຮອງເອົາ ແລະ ນຳເອົາໄປຈັດຕັ້ງປະຕິບັດໃຫ້ປະສິບຜົນສຳເລັດຢ່າງຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ.

**ຂ. ຂອບເຂດວຽກງານ**

- ທີ່ປຶກສາທາງທຸລະກິດ.
- ຝຶກອົບຮົມໄລຍະສັ້ນ, ສຳມະນາ ແລະ ແລກປ່ຽນບົດຮຽນ.
- ການພົບປະທາງດ້ານທຸລະກິດ.
- ສົ່ງເສີມການຕະຫຼາດໃຫ້ແກ່ສະມາຊິກ.
- ສ້າງຜູ້ປະກອບການໃໝ່.
- ຝຶກອົບຮົມໃນຫົວຂໍ້ຕ່າງໆເຊັ່ນ:
  - ຍຸດທະສາດການບໍລິຫານ
  - ການບໍລິຫານການເງິນ-ການບັນຊີ
  - ການບໍລິຫານການຕະຫຼາດ
  - ການບໍລິຫານບຸກຄະລາກອນ

- ການບໍລິຫານໂຄງການ-ການຜະລິດ
- ການຂຽນແຜນທຸລະກິດ
- ການເປັນຜູ້ປະກອບການ ແລະ ວິຊາຕ່າງໆທີ່ຈຳເປັນອີກຫຼາຍວິຊາ.

**3. ຫ້ອງການບໍລິຫານ ແລະ ເລຂາ**

**ກ. ພາລະບົດບາດ**

- ແມ່ນໄດ້ຮັບການຊີ້ນຳ ແລະ ບໍລິຫານງານໂດຍກົງຈາກຮອງປະທານ ແລະ ຄະນະບໍລິຫານງານ ສທໜ ຈຳນວນ 2 ທ່ານຂຶ້ນໄປ.
- ຄະນະຮັບຜິດຊອບມີສິດ ແລະ ພາລະບົດບາດໃນການຄົ້ນຄວ້າ, ຄົ້ນຄິດຊອກຫາແນວທາງ, ວິທີທາງ ແລະ ສ້າງແຜນພັດທະນາຄຸ້ມຄອງ ແລ້ວນຳໄປສະເໜີປະທານ ເພື່ອເປີດກອງປະຊຸມຮັບຮອງເອົາ ແລະ ນຳເອົາໄປຈັດຕັ້ງປະຕິບັດໃຫ້ປະສິບຜົນສຳເລັດຢ່າງຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ.

**ຂ. ຂອບເຂດຂອງວຽກ**

- ຄຸ້ມຄອງຊັບສິນ, ອຸປະກອນ, ພາຫະນະຮັບໃຊ້ຫ້ອງການ.
- ຄຸ້ມຄອງບັນຊີ-ການເງິນຂອງ ສທໜ.
- ຄຸ້ມຄອງເອກະສານ, ຂໍ້ມູນຂ່າວສານຕ່າງໆຂອງ ສທໜ.
- ໜ່ວຍງານປະຊາສຳພັນ.
- ໜ່ວຍງານເລຂານຸການ, ຕິດຕາມແກະສານຂາເຂົ້າ-ຂາອອກ.
- ປະສານງານໃຫ້ແກ່ແຕ່ລະພະແນກ.
- ກະກຽມກອງປະຊຸມ, ຮຽກປະຊຸມຕາມຄຳສັ່ງຂອງປະທານ.
- ບັນທຶກກອງປະຊຸມ, ແຈກຢາຍຂ່າວສານໃຫ້ແກ່ສະມາຊິກ.
- ສ້າງລາຍການໂທລະພາບຂອງ ສທໜ.
- ສ້າງວາລະສານປະຈຳສະມາຄົມ.
- ສ້າງເວັບໄຊຂອງສະມາຄົມ.
- ແຜ່ນພັບໂຄສະນາ.
- ເອກະສານຂໍ້ມູນ.
- ໃບຍ້ອງຍໍຫຼຽນກາທີ່ລະນຶກ.

**4. ພະແນກພົວພັນພາຍໃນ ແລະ ຕ່າງປະເທດ**

**ກ. ພາລະບົດລາດ**

- ແມ່ນໄດ້ຮັບການຊີ້ນຳ ແລະ ບໍລິຫານງານໂດຍກົງຈາກຮອງປະທານ ແລະ ຄະນະບໍລິຫານງານ ສທໜ ຈຳນວນ 2 ທ່ານຂຶ້ນໄປ.
- ຄະນະຮັບຜິດຊອບມີສິດ ແລະ ພາລະບົດບາດໃນການຄົ້ນຄວ້າ, ຄົ້ນຄິດຊອກຫາແນວທາງ, ວິທີທາງ ແລະ ສ້າງແຜນພັດທະນາຄຸ້ມຄອງ ແລ້ວນຳໄປສະເໜີປະທານ ເພື່ອເປີດກອງປະຊຸມຮັບຮອງເອົາ ແລະ ນຳເອົາໄປຈັດຕັ້ງປະຕິບັດໃຫ້ປະສິບຜົນສຳເລັດຢ່າງຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ.

**ຂ. ຂອບເຂດຂອງວຽກ**

**ວຽກງານພົວພັນພາຍໃນ**

- ສ້າງພັນທະມິດ ແລະ ຮ່ວມມືກັບທຸກອົງການຈັດຕັ້ງພາກລັດ ແລະ ເອກະຊົນ ເພື່ອເປັນການເອື້ອອໍານວຍໃຫ້ແກ່ການດໍາເນີນທຸລະກິດຂອງສະມາຊິກ, ໃນຂະນະດຽວກັນກໍໄດ້ສະນາພາລະບົດບາດຂອງສະມາຄົມ.
- ຈັດກິດຈະກໍາຕ່າງໆຮ່ວມກັບພາກລັດ ແລະ ເອກະຊົນເຊັ່ນວ່າ: ການຢ້ຽມຢາມແລກປ່ຽນ, ການແຂ່ງຂັນກິລາ, ໜ່ວຍງານອາສາສະໝັກຊ່ວຍເຫຼືອໄພພິບັດຕ່າງໆ.

**ວຽກງານພົວພັນຕ່າງປະເທດ**

- ສ້າງສາຍພົວພັນຮ່ວມມືກັບອົງການທີ່ກ່ຽວຂ້ອງກັບທຸລະກິດ, ຜູ້ປະກອບການ, ນັກລົງທຶນ ແລະ ບໍລິສັດຕ່າງໆຢູ່ຕ່າງປະເທດ ໃຫ້ມີການຮ່ວມມື ແລະ ເປັນພັນທະມິດກັບ ສທໜ.
- ດຶງດູດເອົາການຮ່ວມມື, ຊ່ວຍເຫຼືອຈາກຕ່າງປະເທດ, ອາສາສະໝັກພາຍໃນ ແລະ ຕ່າງປະເທດ. ໃຫ້ມີການພົບປະແລກປ່ຽນບົດຮຽນ ແລະ ທັດສະນະສຶກສາ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກ.

**5. ພະແນກກອງທຶນ ແລະ ການລົງທຶນ**

**ກ. ພາລະບົດບາດ**

- ແມ່ນໄດ້ຮັບການຊີ້ນໍາ ແລະ ບໍລິຫານງານໂດຍກົງຈາກຮອງປະທານ ແລະ ຄະນະບໍລິຫານງານ ສທໜ ຈໍານວນ 2 ທ່ານຂຶ້ນໄປ.
- ຄະນະຮັບຜິດຊອບມີສິດ ແລະ ພາລະບົດບາດໃນການຄົ້ນຄວ້າ, ຄົ້ນຄິດຊອກຫາແນວທາງ, ວິທີທາງ ແລະ ສ້າງແຜນພັດທະນາຄຸ້ມຄອງ ແລ້ວນໍາໄປສະເໜີປະທານ ເພື່ອເປີດກອງປະຊຸມຮັບຮອງເອົາ ແລະ ນໍາເອົາໄປຈັດຕັ້ງປະຕິບັດໃຫ້ປະສົບຜົນສໍາເລັດຢ່າງຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ.

**ຂ. ຂອບເຂດຂອງວຽກ**

- ສ້າງຕັ້ງກອງທຶນຂອງສະມາຄົມ.
- ສ້າງແຫຼ່ງທຶນກູ້ຢືມໃຫ້ສະມາຊິກ.
- ສ້າງຕັ້ງບໍລິສັດ ຂອງ ສທໜ.
- ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ.
- ເກັບກໍາ, ວິເຄາະສະພາບການພັດທະນາເສດຖະກິດ-ສັງຄົມ ເພື່ອຊອກຫາໂອກາດໃນການລົງທຶນ.
- ສ້າງໂຄງການໃໝ່ ແລະ ບົດວິພາດເສດຖະກິດຕາມທຸລະກິດອັນໃໝ່ ທີ່ເປັນໄປໄດ້ໃນການລົງທຶນຢູ່ລາວ ແລະ ຕ່າງປະເທດ.
- ຂະຫຍາຍທຸລະກິດເກົ່າທີ່ມີຢູ່ ໃຫ້ເພີ່ມຂຶ້ນທັງປະລິມານ ແລະ ຄຸນນະພາບ.

**6. ກວດກາ ແລະ ປະເມີນຜົນ**

**ກ. ພາລະບົດບາດ**

- ແມ່ນໄດ້ຮັບການຊີ້ນໍາ ແລະ ບໍລິຫານງານໂດຍກົງຈາກຮອງປະທານ ແລະ ຄະນະບໍລິຫານງານ ສທໜ ຈໍານວນ 2 ທ່ານຂຶ້ນໄປ.
- ຄະນະຮັບຜິດຊອບມີສິດ ແລະ ພາລະບົດບາດໃນການຄົ້ນຄວ້າ, ຄົ້ນຄິດຊອກຫາແນວທາງ, ວິທີທາງ ແລະ ສ້າງແຜນພັດທະນາຄຸ້ມຄອງ ແລ້ວນໍາໄປສະເໜີປະທານ ເພື່ອເປີດກອງປະຊຸມຮັບຮອງເອົາ ແລະ ນໍາເອົາໄປຈັດຕັ້ງປະຕິບັດໃຫ້ປະສົບຜົນສໍາເລັດຢ່າງຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ.

**ຂ. ຂອບເຂດວຽກງານ**

ປະກອບດ້ວຍສະມາຊິກ 3 ທ່ານຖືກເລືອກຕັ້ງຈາກກອງປະຊຸມໃຫຍ່ສາມັນຂອງ ສທໜ. ຄະນະກວດກາແມ່ນພາກສ່ວນທີ່ສຳຄັນຝ່າຍສະພາບໍລິຫານ ມີໜ້າທີ່ກວດສອບທຸກໜ້າທີ່ຂອງ ສທໜ, ວິໄຈ ແລະ ສະຫຼຸບລາຍງານຕໍ່ຄະນະບໍລິຫານງານ ເພື່ອຮັບພິຈາລະນາ ແລະ ແກ້ໄຂທຸກບັນຫາທີ່ເຫັນວ່າສຳຄັນ ແລະ ຈຳເປັນໃຫ້ແກ່ ສທໜ. ທຸກກອງປະຊຸມຄະນະກວດກາ ຕ້ອງມີໜ້າທີ່ເຂົ້າຮ່ວມ ເພື່ອປະກອບຄຳຄິດເຫັນຂອງຕົນ, ການກວດກາວຽກງານຂອງຄະນະກວດກາ ເປັນໄປດ້ວຍຄວາມປິດລັບ ຫຼື ວິທີເປີດເຜີຍກໍໄດ້, ໃນເມື່ອມີຄວາມຈຳເປັນເຫັນວ່າຕ້ອງມີການກວດກາໜ່ວຍງານໃດໜຶ່ງ ຄະນະກວດກາຕ້ອງສົ່ງໜັງສືແຈ້ງການມາຍັງ ປະທານຄະນະບໍລິຫານງານ ເພື່ອຮັບຊາບ ແລະ ອະນຸມັດປະຕິບັດ.

## ໝວດທີ IV
## ສິດ, ໜ້າທີ່ ແລະ ອົງປະກອບຂອງຄະນະທີ່ປຶກສາຂອງ ສທໜ

### ມາດຕາ 11 : ອົງປະກອບຂອງຄະນະທີ່ປຶກສາ

ຄະນະທີ່ປຶກສາປະກອບມີ 2 ພາກສ່ວນຄື:

- ຄະນະທີ່ປຶກສາກິດຕິມາສັກ ແມ່ນຜູ້ທີ່ໄດ້ຮັບເຊີນຈາກພາກສ່ວນອື່ນເຊັ່ນວ່າ ຈາກການນຳພັກ-ລັດ, ອົງການຈັດຕັ້ງສາກົນ, ຈາກສະຖາບັນ, ຈາກບໍລິສັດ ທຸລະກິດອື່ນເຊິ່ງມາເປັນທີ່ປຶກສາກິດຕິມາສັກ ຕາມຄຳເຊື້ອເຊີນແຕ່ບໍ່ໄດ້ປະຈຳໃນ ສທໜ ແລະ ມີໜ້າທີ່ໃຫ້ຄຳປຶກສາຕາມຄຳເຊື້ອເຊີນຂອງ ສທໜ.
- ຄະນະທີ່ປຶກສາປະຈຳ ແມ່ນຜູ້ທີ່ເຄີຍເປັນຄະນະບໍລິຫານສະມາຊິກຂອງ ສທໜ ແລະ ມີຜົນງານຕໍ່ ສທໜ ມາກ່ອນ ພ້ອມດ້ວຍມີຄວາມຈິງໃຈ ໃນການປະກອບສ່ວນຊ່ວຍພັດທະນາ ສທໜ ໃຫ້ດີຂຶ້ນ, ມີໜ້າທີ່ໃຫ້ຄຳປຶກສາຕາມຄຳເຊື້ອເຊີນຂອງຄະນະບໍລິຫານ ສທໜ, ມີໜ້າທີ່ປະກອບຄຳຄິດຄຳເຫັນໃສ່ແຜນຍຸດທະສາດ, ລະບຽບ ແລະ ເຂົ້າຮ່ວມກອງປະຊຸມປະຈຳປີ ແລະ ກອງປະຊຸມໃຫຍ່ວິສາມັນ.

### ມາດຕາ 12 : ເງື່ອນໄຂ, ຄຸນວຸດທິຂອງທີ່ປຶກສາ

ເປັນຜູ້ທີ່ມີຄວາມຮູ້, ມີປະສົບການ, ມີບົດບາດຢູ່ໃນສັງຄົມ, ມີຄວາມເສຍສະຫຼະ ແລະ ມີຈິດໃຈຈະຊຸກຍູ້ສົ່ງເສີມ ສທໜ ເວົ້າລວມ ເວົ້າສະເພາະແມ່ນສະມາຊິກຂອງ ສທໜ ໃຫ້ມີຄວາມຈະເລີນຂຶ້ນເທື່ອລະກ້າວ.

### ມາດຕາ 13 : ການເລືອກເຂົ້າ ແລະ ພົ້ນອອກຈາກການເປັນທີ່ປຶກສາ

- ຜູ້ທີ່ຈະເປັນທີ່ປຶກສາ ຈະຕ້ອງໄດ້ຮັບການເຊື້ອເຊີນຈາກຄະນະ ສທໜ ຢ່າງເປັນທາງການ ແລະ ມີໃບຕອບຮັບທີ່ເຊັນເປັນລາຍລັກອັກສອນທັງ 2 ຝ່າຍ.
- ການໝົດວາລະຈາກການເປັນທີ່ປຶກສາ ຕ້ອງແມ່ນຜູ້ທີ່ບໍ່ສາມາດເຄື່ອນໄຫວໃຫ້ຄຳປຶກສາໄດ້ດ້ວຍເຫດຜົນສຸຂະພາບ, ເຫດຜົນເວລາ, ເຫດຜົນການກະທຳຜິດທາງດ້ານອາຍາ, ປໍລະປັກ ເຮັດໃຫ້ ສທໜ ເສື່ອມເສຍ ແລະ ຜິດຕໍ່ແນວທາງຂອງພັກ ແລະ ລັດຖະບານ ຜູ້ນັ້ນຈະໄດ້ພົ້ນອອກຈາກການເປັນທີ່ປຶກສາຢ່າງອັດຕະໂນມັດ.

# ໝວດທີ V
## ສິດ, ໜ້າທີ່ ແລະ ອົງປະກອບຂອງຄະນະບໍລິຫານ ສທໜ

**ມາດຕາ 14 : ອົງປະກອບ ແລະ ອາຍຸການຂອງການເປັນຄະນະບໍລິຫານ**

ຄະນະບໍລິຫານງານປະກອບມີ 21 ທ່ານຂຶ້ນໄປ ທີ່ຖືກເລືອກຕັ້ງຈາກກອງປະຊຸມໃຫຍ່ດ້ວຍຄະແນນສຽງສ່ວນຫຼາຍ ມີອາຍຸການ 4 ປີ ຢູ່ລະຫວ່າງກອງປະຊຸມໃຫຍ່ສາມັນຂອງ ສທໜ. ຍົກເວັ້ນ ສທໜ ແຕ່ລະແຂວງຈະຖືກປະກອບເຂົ້າເປັນ ຄະນະກຳມະການບໍລິຫານງານຂອງ ສທໜ ແຫ່ງຊາດ ໂດຍອັດຕະໂນມັດ. ເຊິ່ງປະກອບດ້ວຍຄະນະການຈັດຕັ້ງດັ່ງນີ້:

1. ປະທານຄະນະບໍລິຫານງານ 1 ທ່ານ.
2. ຮອງປະທານຄະນະບໍລິຫານງານ 4 ທ່ານ ຫຼື 6 ທ່ານຂຶ້ນໄປ.
3. ຄະນະບໍລິຫານງານ 21 ທ່ານຂຶ້ນໄປ (ໃນນີ້ລວມປະທານ ສທໜ 18 ແຂວງ)

ຂອບເຂດວາລະດຳລົງຕຳແໜ່ງຂອງປະທານສູງສຸດ ບໍ່ໃຫ້ເກີນ 2 ສະໄໝ.

**ມາດຕາ 15 : ສິດ, ໜ້າທີ່ຄະນະບໍລິຫານ**

1. ຄຸ້ມຄອງອົງການຂອງ ສທໜ ໃຫ້ເຄື່ອນໄຫວໄປຕາມແນວທາງກົດລະບຽບ ແລະ ມະຕິຂອງກອງປະຊຸມໃຫຍ່.
2. ໂຄສະນາເຜີຍແຜ່ນະໂຍບາຍ ແລະ ພາລະບົດບາດຕ່າງໆຂອງ ສທໜ ໃຫ້ທຸກພາກສ່ວນຂອງສັງຄົມເວົ້າລວມ, ເວົ້າສະເພາະສະມາຊິກ ສທໜ ໃຫ້ຮັບຮູ້ ແລະ ເຂົ້າໃຈ, ປົກປ້ອງ ແລະ ສ້າງຊື່ສຽງ ສທໜ ໃຫ້ນັບມື້ນັບສູງເດັ່ນຂຶ້ນໃນເວທີພາຍໃນ ແລະ ຕ່າງປະເທດ.
3. ປົກປັກຮັກສາ ແລະ ນຳໃຊ້ຊັບສິນຂອງ ສທໜ ໃຫ້ໄປຕາມລະບຽບ ແລະ ແນວທາງເພື່ອຮັບໃຊ້ສະມາຊິກ.
4. ເລືອກຕັ້ງບັນດາປະທານ, ຮອງປະທານ, ຫົວໜ້າການເງິນ, ຄະນະກຳມະການ ແລະ ອານຸກຳມະການທັງຫຼາຍ.
5. ຄົ້ນຄວ້າວັນດາວຽກງານທີ່ຈະບັນລຸໄດ້ ມະຕິກອງປະຊຸມໃຫຍ່ຂອງ ສທໜ.
6. ຈັດຕັ້ງ ແລະ ຄຸ້ມຄອງຫ້ອງການເລຂານຸການຂອງ ສທໜ.
7. ຄົ້ນຄວ້າ ແລະ ສະເໜີໂຄງການຂອງສະມາຊິກ ເພື່ອປະຕິບັດໃຫ້ເກີດຜົນ.
8. ຕິດຕາມ ແລະ ຊີ້ນຳໃກ້ຊິດບັນດາວຽກງານຂອງອານຸກຳມະການ ທີ່ກຳລັງປະຕິບັດໂຄງການໃດໜຶ່ງຂອງສະມາຊິກ.
9. ເຊື້ອເຊີນບັນດາສະມາຊິກກິດຕິມາສັກ.
10. ຄົ້ນຄວ້ານຳສະເໜີບັນຫາຂອງບັນດາສະມາຊິກ ເພື່ອນຳສະເໜີຕໍ່ຂັ້ນເທິງພິຈາລະນາ ແລະ ແກ້ໄຂ.
11. ກະກຽມເນື້ອໃນກອງປະຊຸມທຸກສະໄໝ.
12. ໃຫ້ຂໍ້ມູນຂ່າວສານທີ່ສຳຄັນແກ່ສະມາຊິກ.
13. ປະຕິບັດຕາມລະບຽບທຸກຂໍ້ ຂອງກົດລະບຽບສະບັບນີ້ ແລະ ມະຕິຕົກລົງຂອງກອງປະຊຸມໃຫຍ່ສາມັນ.
14. ຄະນະປະທານ ມີສິດ, ແຕ່ງຕັ້ງ ແລະ ປົດຕຳແໜ່ງ ຫົວໜ້າເລຂາທິການ, ຄະນະບໍລິຫານງານ, ອານຸກຳມະການ ແລະ ກຳມາທິການຕ່າງໆ ສທໜ ເຊິ່ງຕ້ອງມີເຫດຜົນທີ່ພຽງພໍ ແລະ ຫາກເຫັນວ່າຜູ້ກ່ຽວບໍ່

ສາມາດເຄື່ອນໄຫວວຽກງານຂອງ ສທໝ ຕາມມາດຕະຖານ ແລະ ເງື່ອນໄຂທີ່ສະໝັກເຂົ້າມາເປັນຄະນະບໍລິຫານງານແຕ່ເບື້ອງຕົ້ນ ໂດຍຕ້ອງແມ່ນສຽງ 2/3 ຈຶ່ງສາມາດປົດໄດ້.

15. ຄະນະບໍລິຫານງານ ສາມາດລາອອກຈາກຕໍາແໜ່ງໃນວາລະດໍາລົງຕໍາແໜ່ງໄດ້ດ້ວຍເຫດຜົນພຽງພໍ ແລະ ໄດ້ຮັບຄວາມເຫັນດີເຫັນພ້ອມ ຂອງຄະນະບໍລິຫານງານດ້ວຍຄະແນນສຽງຫຼາຍກວ່າ 2/3 ຈຶ່ງສາມາດລາອອກໄດ້.

**ມາດຕາ 16 : ກອງປະຊຸມຂອງຄະນະບໍລິຫານງານ**

ພາຍຫຼັງທີ່ໄດ້ຮັບການຈັດຕັ້ງຄະນະບໍລິຫານງານ ຈະໄດ້ເປີດກອງປະຊຸມຂອງຄະນະບໍລິຫານງານຂຶ້ນເພື່ອຈັດຕັ້ງ ແລະ ແບ່ງໜ້າທີ່ ຫຼັງຈາກນັ້ນຈະຕ້ອງໄດ່ຖະແຫຼງການສະເໜີຕົວຕໍ່ສະມາຊິກ ເພື່ອປະຕິຍານຕົນປະຕິບັດໜ້າທີ່ຢ່າງສຸດຄວາມສາມາດ, ບໍລິສຸດຜຸດຜ່ອງ ແລະ ສຸດກົກສຸດປາຍ.

**ມາດຕາ 17 : ວຽກງານວິຊາສະເພາະ ສະເພາະກິດ**

ຄະນະບໍລິຫານງານ ສາມາດອະນຸມັດສ້າງຕັ້ງໜ່ວຍງານສະເພາະກິດທາງດ້ານວິຊາການຂຶ້ນ ອາດສ້າງເປັນອະນຸກໍາມະການສະເພາະກິດ ຫຼື ເປັນກໍາມະທິການ ແລະ ເຊື້ອເຊີນອົງການຈັດຕັ້ງ, ບຸກຄົນນອກ ແລະ ສາມາດເຂົ້າຮ່ວມໂຄງການດ້ານວິຊາສະເພາະໄດ້ໂດຍບໍ່ຈໍາກັດອາຍຸ.

**ມາດຕາ 18 : ການຄັດເລືອກ ແລະ ແຕ່ງຕັ້ງຄະນະບໍລິຫານງານ**

ຜູ້ທີ່ຈະເປັນຄະນະບໍລິຫານງານຂອງ ສທໝ ຕ້ອງໄດ້ຜ່ານຂະບວນການຄັດເລືອກດັ່ງຕໍ່ໄປນີ້:

- ແມ່ນຜູ້ທີ່ຖືກ ແລະ ຄົບມາດຕະຖານເງື່ອນໄຂຂອງ ສທໝ ທີ່ໄດ້ກໍານົດອອກ.
- ຕ້ອງໄດ້ຜ່ານຂະບວນການເລືອກຕັ້ງຈາກກອງປະຊຸມໃຫຍ່ຂອງ ສທໝ ທີ່ໄດ້ຈັດຕັ້ງຂຶ້ນທຸກໆ 4 ປີ.
- ຕ້ອງໄດ້ຮັບການເຫັນດີ ແລະ ເຊັນຮັບຮອງຈາກສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ.

**ມາດຕາ 19 : ການພົ້ນອອກຕໍາແໜ່ງຂອງຄະນະບໍລິຫານງານ**

- ເມື່ອອາຍຸການບໍລິຫານງານ ຫາກຄົບຕາມເວລາທີ່ກໍານົດໄວ້ໃນລະບຽບສະບັບນີ້.
- ຜູ້ກ່ຽວລາອອກ ແລະ ອະນຸມັດໃຫ້ລາອອກ.
- ພົ້ນອອກຈາກການເປັນຕົວແທນນິຕິບຸກຄົນພິການທາງສະໝອງ ແລະ ເສຍຊີວິດ.
- ບໍ່ໄປຕາມເງື່ອນໄຂ ແລະ ຄຸນສົມບັດຂອງຄະນະບໍລິຫານງານ ສທໝ.
- ຖືກສານຕັດສິນໂທດຖານອາຍາ.
- ການກະທໍາໃດໆທີ່ເຮັດໃຫ້ມີການເສື່ອມເສຍຕໍ່ ສທໝ ແລະ ສຽງສ່ວນຫຼາຍເຫັນດີໃຫ້ປົດອອກ ຫຼື ຢຸດເຊົາອອກຈາກການເປັນຄະນະບໍລິຫານ.
- ລະເມີດລະບຽບ ແລະ ຂາດຄຸນສົມບັດໃນການເປັນຄະນະບໍລິຫານງານອີກຕໍ່ໄປ ຫຼື ກໍລະນີຄະນະບໍລິຫານງານຜູ້ນັ້ນ ມີເຫດຜົນພຽງພໍ ແລະ ສະໝັກໃຈຂໍລາອອກດ້ວຍຕົນເອງ.

**ມາດຕາ 20 : ກໍລະນີຕໍາແໜ່ງວ່າງ**

ຄະນະປະທານ ສາມາດເປີດກອງປະຊຸມເລືອກຕັ້ງສ້ອມ ເພື່ອຄັດເລືອກເອົາສະມາຊິກຜູ້ໃດຜູ້ໜຶ່ງ ທີ່ໄດ້ສຽງສ່ວນຫຼາຍຂຶ້ນມາແທນ ແລະ ສະເໜີໃຫ້ສູນກາງຊາວໜຸ່ມເຊັນຮັບຮອງເອົາ.

**ມາດຕາ 21 : ເງື່ອນໄຂ ມາດຖານ ຂອງຜູ້ຈະເປັນຄະນະບໍລິຫານງານ ສທໝ**

ເງື່ອນໄຂ ແລະ ມາດຖານຂອງຜູ້ຈະເປັນຄະນະບໍລິຫານງານ ສທໝ ຈະໄດ້ກໍານົດຕ່າງຫາກໃນໄລຍະຈັດຕັ້ງກອງປະຊຸມເລືອກຕັ້ງຄະນະບໍລິຫານງານ ສທໝ ທົ່ວປະເທດ ແຕ່ລະສະໄໝຕາມບົດບາດ ແລະ ຄວາມຈໍາເປັນຕາມການຮຽກຮ້ອງຕ້ອງການຂອງວຽກງານ ຂອງອົງການຈັດຕັ້ງ ສທໝ.

## ໝວດທີ VI

## ວ່າດ້ວຍສະມາຊິກ, ສິດ ແລະ ພາລະບົດບາດຂອງສະມາຊິກ

**ມາດຕາ 22 : ເງື່ອນໄຂຜູ້ທີ່ຈະສະໝັກເປັນສະມາຊິກ**

ຜູ້ປະກອບການ, ນັກທຸລະກິດທຸກຄົນ ຫຼື ນິຕິບຸກຄົນທີ່ດໍາເນີນທຸລະກິດ ຖືກຕ້ອງຕາມລະບຽບກົດໝາຍແຫ່ງ ສປປ ລາວ ທີ່ມີອາຍຸນັບແຕ່ 18 ເຖິງ 49 ປີ, ມີຄວາມສະໝັກໃຈດ້ວຍຕົນເອງ ລ້ວນແລ້ວແຕ່ມີສິດສະໝັກເຂົ້າເປັນສະມາຊິກຂອງ ສທໝ ໄດ້ຕາມລະບຽບທີ່ໄດ້ລະບຸໄວ້ໃນລະບຽບສະບັບນີ້.

**ມາດຕາ 23 : ປະເພດຂອງສະມາຊິກ**

1. ສະມາຊິກສາມັນ, ແມ່ນບຸກຄົນ ຫຼື ນິຕິບຸກຄົນທີ່ເປັນນັກທຸລະກິດ ແລະ ຖືສັນຊາດລາວ ດໍາເນີນທຸລະກິດພາຍໃຕ້ກົດໝາຍວິສາຫະກິດແຫ່ງ ສປປ ລາວ, ມີສິດສະໝັກເຂົ້າເປັນຄະນະບໍ ລິຫານງານ.
2. ສະມາຊິກວິສາມັນ ແມ່ນບຸກຄົນເຊື້ອຊາດລາວ ຫຼື ນິຕິບຸກຄົນທີ່ເປັນນັກທຸລະກິດ ແຕ່ບໍ່ໄດ້ຖືສັນຊາດລາວ ດໍາເນີນທຸລະກິດພາຍໃຕ້ກົດໝາຍວິສາຫະກິດແຫ່ງ ສປປ ລາວ ມີສິດສະໝັກເຂົ້າເປັນຄະນະບໍລິຫານງານ ສທໝ.
3. ສະມາຊິກສົມທົບ ແມ່ນບຸກຄົນ ຫຼື ນິຕິບຸກຄົນທີ່ບໍ່ເປັນນັກທຸລະກິດ ແລະ ເປັນນັກທຸລະກິດ ແລະ ບໍ່ໄດ້ຈໍາແນກສັນຊາດລາວ ບໍ່ໄດ້ດໍາເນີນວິສາຫະກິດພາຍໃຕ້ກົດໝາຍວິສາຫະກິດແຫ່ງ ສປປ ລາວ ແຕ່ດໍາເນີນທຸລະກິດຖືກຕ້ອງຕາມກົດໝາຍຢູ່ຕ່າງປະເທດ. ມີຄວາມສະໝັກໃຈ ເຫັນດີເຫັນພ້ອມຕໍ່ແນວທາງນະໂຍບາຍ ຢາກເຂົ້າຮ່ວມຂະບວນການເຄື່ອນໄຫວຮ່ວມກັບ ແລະ ບໍ່ມີສິດສະໝັກເຂົ້າເປັນຄະນະບໍລິຫານງານ ສທໝ.
4. ສະມາຊິກກິດຕິມະສັກ ແມ່ນບຸກຄົນ ຫຼື ນິຕິບຸກຄົນ ທີ່ບໍ່ຈໍາແນກສັນຊາດ, ບໍ່ຈໍາແນກອາຍຸ, ດໍາເນີນທຸລະກິດ ຫຼື ບໍ່ດໍາເນີນທຸລະກິດພາຍໃຕ້ກົດໝາຍ, ວິສາຫະກິດແຫ່ງ ສປປ ລາວ ເປັນຜູ້ມີຄຸນວຸດທິ, ມີຄວາມຮູ້ຄວາມສາມາດ, ຄວາມຊ່ຽວຊານ, ຊໍານິຊໍານານ, ດ້ານວິຊາການ, ມີຄວາມສະໝັກໃຈ ແລະ ຖືກເຊື້ອເຊີນຈາກຄະນະບໍລິຫານງານ ສທໝ.

**ມາດຕາ 24 : ການສະໝັກເຂົ້າເປັນສະມາຊິກ**

ຜູ້ທີ່ຈະສະໝັກເຂົ້າເປັນສະມາຊິກຂອງ ສທໝ ຈະຕ້ອງສະໝັກໃຈ ແລະ ປະກອບຄໍາຮ້ອງຂອງຕົນໄປຍັງຫ້ອງການ ສທໝ ຕາມແບບຟອມ ແລະ ຂໍ້ມູນທີ່ກໍານົດໄວ້.

ຜູ້ສະໝັກຈະໄດ້ຮັບຜົນການສະໝັກພາຍໃນ 5 ມື້ ເຮັດວຽກລັດຖະການ ໂດຍໄດ້ຮັບຄວາມເຫັນດີຈາກຄະນະປະຈໍາຂອງ ສທໝ ຫຼາຍກວ່າ 2/3 ຂອງສຽງໃນຄະນະປະຈໍາ ໃນກໍລະນີບໍ່ສາມາດຕັດສິນໃຈໄດ້ນັ້ນ ຈະຕ້ອງໄດ້ນໍາສະເໜີຕໍ່ສະພາຄະນະບໍລິຫານງານຄົບຄະນະ, ຖ້າຍັງຕັດສິນບໍ່ໄດ້ຈະຕ້ອງໄດ້ເຊີນຄະນະກໍາມະການກວດກາ ແລະ ທີ່ປຶກສາບາງຈໍານວນເຂົ້າຮ່ວມຕັດສິນ.

ເມື່ອມີການຮັບຮອງເອົາສະມາຊິກໃໝ່ແລ້ວ ຈະຕ້ອງໄດ້ແຈ້ງໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ລວມທັງສະມາຊິກເກົ່າໃຫ້ຮັບຊາບນຳ ແລະ ຢ່າງຊ້າຕ້ອງໃຫ້ສະມາຊິກໃໝ່ມາສະເໜີຕົວຕໍ່ໜ້າສະມາຊິກ ໃນກອງປະຊຸມເຕົ້າໂຮມໃດໜຶ່ງ.

ສະມາຊິກໃໝ່ທີ່ຖືກຮັບເອົາເປັນສະມາຊິກ ຈະຕ້ອງປະຕິບັດຕາມພັນທະຂອງຕົນ ໂດຍສະເພາະແມ່ນການຊຳລະຄ່າລົງທະບຽນ, ເງິນບຳລຸງປະຈຳປີ ແລະ ຄ່າທຳນຽມອື່ນໆ ຕາມກົດລະບຽບສະບັບນີ້ພາຍໃນ 15 ມື້ ທີ່ໄດ້ຮັບການແຈ້ງເຂົ້າເປັນສະມາຊິກຢ່າງເປັນທາງການ, ຖ້າບໍ່ດັ່ງນັ້ນຖືວ່າຜູ້ກ່ຽວສະຫຼະສິດ ໃນການເປັນສະມາຊິກ.

**ມາດຕາ 25 : ການມອບສິດແທນຕົວເອງ**

ສະມາຊິກສາມາດມອບສິດໃຫ້ອີກຜູ້ໜຶ່ງ ເປັນຕົວແທນໃຫ້ແກ່ຕົນເອງໃນການເຂົ້າຮ່ວມກິດຈະກຳຂອງ ສທໝ ບຸກຄົນນັ້ນຈະຕ້ອງຖືກແຕ່ງຕັ້ງຈາກສະມາຊິກຜູ້ທີ່ກ່ຽວຂ້ອງນັ້ນ ດ້ວຍລາຍລັກອັກສອນແຈ້ງໃຫ້ຄະນະບໍລິຫານງານ ສທໝ ຮັບຊາບຢ່າງໜ້ອຍ 3 ມື້ລັດຖະການ ແລະ ຜູ້ຖືກແຕ່ງຕັ້ງນັ້ນ ຈະຕ້ອງແມ່ນບຸກຄົນທີ່ມີສ່ວນຮ່ວມ ສ່ວນໄດ້ສ່ວນເສຍໃນທຸກທຸລະກິດ ທີ່ສາມາດດຳເນີນທຸລະກິດຢູ່. ຜູ້ຮັບສິດແທນບໍ່ມີສິດແຕ່ງຕັ້ງບຸກຄົນອື່ນໃຫ້ແທນຕົວເອງໃນການໃຊ້ສິດເລືອກຕັ້ງ ຫຼື ລົງຄະແນນສຽງຮັບຕຳແໜ່ງແທນໃນຄະນະບໍລິຫານ, ການເຊັນສັນຍາຮັບໂຄງການການກູ້ຢືມເງິນຈາກ ສທໝ ແລະ ທຸກວຽກງານ ທີ່ອາດສາມາດມີຜົນກະທົບຕໍ່ທຸລະກິດຂອງສະມາຊິກເອງ.

**ມາດຕາ 26 : ສະມາຊິກສະພາບຂອງສະມາຊິກ ຈະໝົດລົງໃນກໍລະນີດັ່ງລຸ່ມນີ້:**

- ເສຍຊີວິດ ຫຼື ໝົດຄວາມເປັນນິຕິບຸກຄົນ, ຜູ້ສືບທອດໃນສາຍເລືອດສາມາດສະໝັກສືບທອດເຈດຕະນາລົມອັນດີຂອງ (ສະມາຊິກສາມັນ) ຜູ້ໝົດສະມາຊິກພາບໄດ້ໂດຍໄດ້ຮັບຄວາມເຫັນດີຈາກສະພາ ແຕ່ບໍ່ມີສິດດຳລົງຕຳແໜ່ງໃດແທນໄດ້ ນອກຈາກມີການເລືອກຕັ້ງຂອງກອງປະຊຸມໃຫຍ່ສາມັນຂອງ ສທໝ ເທົ່ານັ້ນ.
- ເສີຍເງື່ອນໄຂຄຸນສົມບັດໃດໜຶ່ງ ໃນກົດລະບຽບສະບັບນີ້.
- ຍື່ນໃບລາອອກນີ້ດ້ວຍຄວາມສະໝັກໃຈ ແລະ ໄດ້ຮັບອະນຸຍາດຈາກຄະນະປະທານຂອງ ສທໝ ຢ່າງເປັນທາງການ.
- ຖືກພິພາກສາໃຫ້ເປັນບຸກຄົນທີ່ລົ້ມລະລາຍໃນທຸລະກິດຂອງຕົນ ແລະ ບໍ່ສາມາດແກ້ໄຂ ຫຼື ປັບປຸງໄດ້.
- ຂາດຄຸນສົມບັດ ແລະ ຄວາມສາມາດ, ເຈັບປ່ວຍບໍ່ມີສະຕິ.
- ຖືກສານຕັດສິນຄະດີອາຍາ.
- ຖືກລົງວິໄນດ້ວຍຄະແນນສຽງ 2/3 ຂອງຄະນະປະທານ ໃຫ້ອອກຈາກການເປັນສະມາຊິກເມື່ອມີກໍລະນີໃຊ້ຖານະການເປັນສະມາຊິກ ເຮັດໃຫ້ຊື່ສຽງຂອງ ສທໝ ເສື່ອມເສຍບໍ່ວ່າຈະທາງກົງ ຫຼື ທາງອ້ອມນຳໃຊ້ຖານະຕຳແໜ່ງຂອງຕົນ ເພື່ອຜົນປະໂຫຍດສ່ວນຕົວ ແລະ ສິ່ງຜົນເສຍຫາຍໃຫ້ແກ່ສະມາຊິກກໍ່ຄື ສທໝ.
- ບໍ່ເຫັນດີກັບນະໂຍບາຍຂອງ ສທໝ ທີ່ຖືກຮັບຮອງເອົາຢ່າງເປັນທາງການແລ້ວ ປະຕິບັດການຕໍ່ຕ້ານອັນສົ່ງຜົນເສຍຫາຍມາສູ່ ສທໝ.
- ບໍ່ເຄົາລົບກົດລະບຽບ ແລະ ເຈດຕະນາລະເມີດກົດລະບຽບ, ບໍ່ເສຍຄ່າລົງທະບຽນ, ເງິນບຳລຸງເມື່ອຖືກຕັກເຕືອນເຖິງ 3 ຄັ້ງ ຖືວ່າສະມາຊິກຜູ້ນັ້ນມີເຈດຕະນາທຳລາຍ ສທໝ ຈຶ່ງໄດ້ໝົດສິດໃນການເປັນສະມາຊິກຂອງ ສທໝ.
- ລັດຖະບານກຳນົດຄຳສັ່ງໃຫ້ບຸກຄົນດັ່ງກ່າວ ບໍ່ສາມາດດຳລົງຊີວິດຢູ່ໃຕ້ລັດຖະທຳມະນູນ ແລະ ກົດໝາຍແຫ່ງ ສປປ ລາວ ແລະ ຖືກເນລະເທດອອກຈາກປະເທດ ສປປ ລາວ.

- ໃນທຸກກໍລະນີທີ່ສະມາຊິກ ຫາກໝົດສະມາຊິກກະພາບລົງ ສທໜ ຈະຕ້ອງແຈ້ງການໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງໃຫ້ຮັບຊາບຢ່າງເປັນທາງການ.
- ສະມາຊິກຜູ້ໝົດສະມາຊິກກະພາບ ສາມາດຮັບຜົນປະໂຫຍດສຸດທ້າຍຂອງຕົນ ທີ່ກ່ຽວຂ້ອງກັບການດຳເນີນທຸລະກິດຮ່ວມກັບ ສທໜ ໃນເມື່ອໄດ້ຊຳລະທຸກຂໍ້ຜູກພັນ ແລະ ພັນທະທີ່ຕົນມີຢູ່ໃຫ້ເປັນທີ່ຮຽບຮ້ອຍແລ້ວ.

## ມາດຕາ 27 : ສິດຂອງສະມາຊິກ

- ໄດ້ຮັບການຊ່ວຍເຫຼືອຕາມຈຸດປະສົງ, ສິດ ແລະ ໜ້າທີ່ຂອງ ສທໜ ທີ່ໄດ້ລະບຸໄວ້ໃນລະບຽບສະບັບນີ້.
- ເຂົ້າຮ່ວມປະຊຸມກ່ຽວກັບໂຄງການ, ກອງປະຊຸມວິສາມັນ, ສາມັນ ແລະ ກອງປະຊຸມອື່ນໆຂອງ ສທໜ.
- ສະເໜີ ແລະ ໃຫ້ຂໍ້ຄິດເຫັນຕ່າງໆກ່ຽວກັບການດຳເນີນຂອງ ສທໜ ໃຫ້ສອດຄ່ອງກັບຈຸດປະສົງ, ລະບຽບກົດໝາຍຂອງລັດ ແລະ ແນວທາງນະໂຍບາຍຂອງພັກ.
- ກວດກາກິດຈະການໂຄງການ ແລະ ຊັບສິນບັດຂອງ ສທໜ ດ້ວຍການຊອກຮູ້ຊັກຖາມ ຫຼື ຂຽນຈົດໝາຍທວງຖາມ ແລະ ວິທີອື່ນທີ່ຖືກຕ້ອງຕາມກົດໝາຍ.
- ສະມາຊິກສາມັນ ແລະ ວິສາມັນ ມີສິດລົງຄະແນນສຽງ ເລືອກຕັ້ງ ແລະ ຮັບສະໝັກເລືອກຕັ້ງເຂົ້າໃນຄະນະບໍລິຫານງານຂອງ ສທໜ. ກຳມະການຂອງຄະນະບໍລິຫານງານ ມີສິດສະເໜີຕົວແທນຂອງຕົນຮັບເລືອກຕັ້ງ ເຂົ້າເປັນຄະນະບໍລິຫານງານສູນກາງ ຊປປ ລາວ ໄດ້.
- ສິກຂອງການສະເໜີໂຄງການຂອງຕົນໃຫ້ ສທໜ ຄົ້ນຄວ້າຮັບຮອງ ແລະ ປະຕິບັດ.
- ສິດໃນການຮັບຮູ້ຂ່າວສານທາງງທຸລະກິດ.
- ສິດໃນການຍົກລະດັບການບໍລິຫານງານ ແລະ ຄວາມເປັນຜູ້ນຳຂອງສະມາຊິກເອງ.
- ສິດໃນການພົວພັນສາກົນ, ເຂົ້າຮ່ວມກອງປະຊຸມສາກົນ, ພາກພື້ນ ແລະ ໃນໂລກ.
- ສິດໃນການຮັບທຶນຊ່ວຍເຫຼືອ ແລະ ການທັດສະນະສຶກສາໃນນາມ ສທໜ.
- ສິດໃນການຂໍທຶນກູ້ຢືມສຳລັບໂຄງການຂອງຕົນ ໄດ້ຜ່ານການຮັບຮອງຈາກ ສທໜ ເປັນທີ່ຮຽບຮ້ອຍແລ້ວ.
- ທຸກສິດທີ່ຈະເຮັດໃນທຸລະກິດຂອງສະມາຊິກ ເຕີບໃຫຍ່ຂະຫຍາຍຕົວ.
- ບໍ່ຜິດຕໍ່ກົດລະບຽບກົດໝາຍຂອງລັດ ແລະ ຮັບພິດຈາລະນາຄຳສະເໜີນັ້ນຕໍ່ ສທໜ.
- ສິດໃນທານເປັນສະມາຊິກພັກ ປະຊາທິປະໄຕ ປະຊາຊົນລາວ.

## ມາດຕາ 28 : ໜ້າທີ່ຂອງສະມາຊິກ

- ປົກປັກຮັກສາ ແລະ ເສີມຂະຫຍາຍຄວາມສາມັກຄີ ພາຍໃຕ້ນັກທຸລະກິດໜຸ່ມໃຫ້ກາຍເປັນພະລັງແຮງເສດຖະກິດຂອງຊາດ.
- ປະຕິບັດຕາມກົດລະບຽບຂອງ ສທໜ ເຂັ້ມງວດເພື່ອເຮັດໃຫ້ໂຄງການຂອງສະມາຊິກເອງ ຫຼື ໂຄງການຮ່ວມມືຂອງ ສທໜ ມີປະສິດທິຜົນ ແລະ ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ.
- ມີທັດສະນະຄິດປະດິດສ້າງ, ປົກປ້ອງ ແລະ ພັດທະນາທຸລະກິດຂອງຕົນ ໃຫ້ເຕີບໃຫຍ່ຂະຫຍາຍຕົວປະກອບສ່ວນເຂົ້າໃນການພັດທະນາສີມືແຮງງານ, ແກ້ໄຂບັນຫາວຽກເຮັດງານທຳ.
- ສະເໜີໂຄງການໃໝ່ໆໃຫ້ແກ່ ສທໜ ເພື່ອພິຈາລະນາ ແລະ ນຳສະເໜີຕໍ່ສະພາ ສທໜ ໃຫ້ອະນຸມັດປະຕິບັດ.

- ເປັນເຈົ້າການປະກອບສ່ວນເຂົ້າໃນການກໍ່ສ້າງ ແລະ ຂະຫຍາຍທຸລະກິດ, ບໍລິສັດ, ສະພາບໍລິສັດ ມະຫາຊົນ ແລະ ການຮ່ວມມືສາກົນທັງຂອງຕົນເອງ ແລະ ຂອງ ສທໜ.
- ອອກເງິນບຳລຸງ ສທໜ ຕາມລະບຽບ. ເຄື່ອນໄຫວດຳເນີນງານຖືກຕ້ອງຕາມກົດໝາຍ ແລະ ປົກປັກຮັກສາຄວາມລັບຂອງ ສທໜ. ຮັກສາກຽດສັກສີຂອງຄວາມເປັນສະມາຊິກຂອງ ສທໜ.
- ເຂົ້າຮ່ວມການສ້າງກອງທຶນສະສົມເພື່ອຄວາມໝັ້ນຄົງ ແລະ ກອງທຶນເພື່ອການພັດທະນາຂອງ ສທໜ ດ້ວຍຄວາມສະໝັກໃຈ.
- ຕາງໜ້າໃຫ້ ສທໜ ເວລາຖືກຮັບມອບໝາຍໄປປະຊຸມ ຫຼື ເຄື່ອນໄຫວຢູ່ເວທີສາກົນ.
- ປົກປ້ອງ ແລະ ໃຫ້ຄວາມຊ່ວຍເຫຼືອແກ່ສະພາສະມາຊິກດ້ວຍກັນ.
- ປະກອບສ່ວນສົມທົບເຂົ້າໃນການ ໃຫ້ຄວາມຊ່ວຍເຫຼືອປະເທດຊາດ ໃນກໍລະນີມີຄວາມຂັບຂັນ, ໄພທຳມະຊາດ, ໄພອຶດຫິວ, ໄພສົງຄາມຮຸກຮານ ແລະ ອື່ນໆ.
- ເປັນພົນລະເມືອງດີ ແລະ ປະຕິບັດພັນທະຂອງຕົນຢ່າງຄົບຖ້ວນຕໍ່ກົດໝາຍ ແລະ ລັດຖະທຳມະນູນຂອງ ສປປ ລາວ.

**ມາດຕາ 29 : ວ່າດ້ວຍການລົງທະບຽນ ແລະ ເງິນບຳລຸງ**

1. ການຈ່າຍເງິນຄ່າລົງທະບຽນສະມາຊິກທຸກປະເພດ (ເວັ້ນແຕ່ສະມາຊິກກິດຕິມະສັກ) ຕ້ອງຈ່າຍຄ່າລົງທະບຽນ ແລະ ເງິນບຳລຸງປະຈຳປີຕາມລະບຽບການຂອງ ສທໜ. ອັດຕາການເສຍເງິນອຸດໜູນແມ່ນໃຫ້ອີງຕາມມັດຕິຕົກລົງຂອງກອງປະຊຸມປະຈຳປີ ຂອງຄະນະບໍລິຫານງານ ສທໜ.
2. ການລົງທະບຽນຂອງສະມາຊິກສາມັນ, ວິສາມັນ ແລະ ສະມາຊິກສົມທົບ ລ້ວນແລ້ວຕ້ອງລົງທະບຽນຕາມວິທີ:
   - ມາລົງທະບຽນດ້ວຍຕົນເອງ ຫຼື ມອບໃຫ້ຕົວແທນເປັນລາຍລັກອັກສອນທີ່ສຳນັກງານຂອງ ສທໜ.
   - ດ້ວຍການຍື່ນຄຳຮ້ອງໄປທາງໄປສະນີ.
   - ດ້ວຍການຍື່ນຄຳຮ້ອງ ໂດຍຜ່ານໂທລະສານ
   - ດ້ວຍການຍື່ນຄຳຮ້ອງ ຜ່ານອີເມລ.
   - ດ້ວຍການລົງທະບຽນທາງເວັບໄຊຂອງ ສທໜ.
   - ດ້ວຍການຍື່ນຄຳຮ້ອງໂດຍກົງກັບພະນັກງານຂົນຂວາຍຂອງ ສທໜ.
3. ເອກະສານປະກອບ ເພື່ອຂໍເປັນສະມາຊິກ:
   - ໃບຄຳຮ້ອງຂຽນດ້ວຍຕົນເອງ ຫຼື ຕາມແບບຟອມທີ່ມີຢູ່.
   - ປະຫວັດຫຍໍ້ຂອງຜູ້ສະໝັກ.
   - ປະຫວັດ ແລະ ລາຍລະອຽດຂອງທຸລະກິດ.
   - ຮູບ 3*4 ສີ່ໃບ, ເພື່ອປະກອບບັດສະມາຊິກ ແລະ ແຟ້ມສຳເນົາເອກະສານຂອງສະມາຊິກເອງ.

   ເອກະສານອື່ນໆທີ່ທາງຄະນະກຳມະການບໍລິຫານ ສທໜ ໄດ້ກຳນົດເພີ່ມເປັນໄລຍະ.

**ມາດຕາ 30 : ວ່າດ້ວຍການສ້າງຕັ້ງ ສທໜ ຢູ່ທ້ອງຖິ່ນ ແລະ ຕ່າງປະເທດ**

- ສທໜ ສາມາດຂະຫຍາຍສາຂາເປັນ ສທໜ ທ້ອງຖິ່ນ ແລະ ສທໜ ຢູ່ຕ່າງປະເທດໄດ້ ໂດຍໃຫ້ສົມທົບກັບພາກສ່ວນອົງການຈັດຕັ້ງຊາວໜຸ່ມຂັ້ນແຂວງ ໃນການສ້າງຕັ້ງສາຂາ ສທໜ ຂັ້ນແຂວງ, ຂັ້ນເມືອງ ແລະ ປະຕິບັດໃຫ້ຖືກຕາມກົດໝາຍຂອງທ້ອງຖິ່ນນັ້ນໆ ສາຂາ ສທໜ ສາມາດສະເໜີຂໍອະນຸມັດຈາກ

ສຫໜ ສູນກາງໃນການອອກກົດລະບຽບ ເພື່ອໃຫ້ສອດຄ່ອງກັບສະພາບການເຄື່ອໄຫວຕົວຈິງໃນທ້ອງຖິ່ນຂອງຕົນ ໂດຍອີງໃສ່ກົດລະບຽບຫຼັກທີ່ສູນກາງກຳນົດ ນຳໃຊ້ທົ່ວປະເທດ.

- ສາຂາ ສຫໜ ຈະຕ້ອງປະຕິບັດຕາມນະໂຍບາຍ ແລະ ລະບຽບການຂອງ ສຫໜ ສູນກາງວາງອອກຢ່າງເຂັ້ມງວດ ແລະ ໃຫ້ແທດເໝາະກັບທ້ອງຖິ່ນນັ້ນໆ, ສາຂາ ສຫໜ ຈະຕ້ອງມີການເລືອກຕັ້ງຄະນະບໍລິຫານງານ ແລະ ມີອາຍຸການບໍລິຫານງານເປັນເວລາ 4 ປີ ແລະ ສາມາດປັບປຸງຄະນະບໍລິຫານງານກາງສະໄໝໄດ້ ຖ້າມີສຽງເກີນ 2/3.
- ສາຂາ ສຫໜ ມີຫ້ອງການ ແລະ ເປັນກົງຈັກທີ່ກຸ້ມຕົນເອງທາງດ້ານງົບປະມານ ແລະ ເສຍພັນທະປະກອບສ່ວນໃນການຈັດກອງປະຊຸມໃຫຍ່ທົ່ວປະເທດ ໃຫ້ແກ່ ສຫໜ ສູນກາງ.
- ສາຂາ ສຫໜ ຈະຕ້ອງສົ່ງບົດສະຫຼຸບປະຈຳເດືອນ, ໄຕມາດ ແລະ ປະຈຳປີຂອງຕົນໃຫ້ແກ່ ສຫໜ ສູນກາງ, ສາຂາ ສຫໜ ແຂວງ ຍັງບໍ່ທັນມີຄວາມເຂັ້ມແຂງທາງດ້ານງົບປະມານ ແມ່ນຈະຖືກຍົກເວັ້ນການເສຍພັນທະຄ່າບຳລຸງປະຈຳປີໃຫ້ແກ່ ສຫໜ ສູນກາງ.
- ລາຍຮັບທັງໝົດ ສຫໜ ທ້ອງຖິ່ນ ຫຼື ຢູ່ຕ່າງປະເທດ ແມ່ນມອບໃຫ້ພາກສ່ວນນັ້ນຮັບຜິດຊອບເອງ.
- ສາຂາ ສຫໜ ມີສິດຕັດສິນບັນຫາທ້ອງຖິ່ນຂອງຕົນ ແຕ່ບັນຫາໃດ ທີ່ອາດເປັນຜົນສະທ້ອນໃຫຍ່ຫຼວງຕໍ່ສ່ວນລວມ ສາຂານັ້ນຈະຕ້ອງລາຍງານ ແລະ ຂໍຄຳປຶກສາຈາກ ສຫໜ ສູນກາງ.
- ຫ້າມເດັດຂາດ ໃຫ້ ສຫໜ ດຳເນີນການຜິດຕໍ່ກົດລະບຽບກົດໝາຍ ແລະ ນະໂຍບາຍຂອງ ສຫໜ.
- ສາຂາ ສຫໜ ສາມາດສະເໜີຂໍອະນຸມັດຈາກ ສຫໜ ສູນກາງ ໃນການຂໍເພີ່ມບາງມາດຕາ ເພື່ອໃຫ້ສອດຄ່ອງກັບການເຄື່ອນໄຫວຕົວຈິງ ຂອງທ້ອງຖິ່ນຂອງຕົນ. ໂດຍອີງໃສ່ກົດລະບຽບຫຼັກ ທີ່ສູນກາງກຳນົດນຳໃຊ້ທົ່ວປະເທດ.

## ໝວດທີ VII
## ວ່າດ້ວຍການຈັດຕັ້ງຄຸ້ມຄອງ ແລະ ກອງປະຊຸມຂອງສະມາຄົມ ນັກທຸລະກິດໜຸ່ມແຫ່ງຊາດ

**ມາດຕາ 31 : ອົງປະກອບຈັດຕັ້ງສູງສຸດຂອງສະມາຄົມ ນັກທຸລະກິດໜຸ່ມແຫ່ງຊາດ**

- ກອງປະຊຸມໃຫຍ່ຂອງ ສຫໜ ທີ່ຈັດຂຶ້ນທຸກ 4 ປີ ແມ່ນກອງປະຊຸມສູງສຸດປະກອບດ້ວຍຕົວແທນຂອງສະມາຊິກທັງໝົດທົ່ວປະເທດ ເລືອກຕັ້ງເອົາຄະນະບໍລິຫານງານ.
- ຄະນະບໍລິຫານງານທີ່ຖືກເລືອກຕັ້ງຈາກສະມາຊິກຂອງ ສຫໜ ຈະເປັນຜູ້ລົງຄະແນນສຽງເລືອກຕັ້ງປະທານ ແລະ ຮອງປະທານ, ໂດຍຕຳແໜ່ງປະທານ ຕ້ອງໄດ້ຮັບການເຫັນດີເຫັນພ້ອມຈາກສູນກາງຊາວໜຸ່ມ.
- ຄະນະປະຈຳເຊິ່ງປະກອບມີປະທານ, ຮອງປະທານ ແລະ ຄະນະກຳມະການບໍລິຫານ ໂດຍຈະໄດ້ຮັບການປະຕິບັດງານໂດຍແບ່ງຂັ້ນຄຸ້ມຄອງບໍລິຫານຢ່າງລະອຽດ.

ຄະນະກວດກາ ເຊິ່ງຄະນະກວດການີ້ແມ່ນອົງປະກອບໜຶ່ງທີ່ນອນຢູ່ໃນສະພາບໍລິຫານ ແລະ ຖືກແຕ່ງຕັ້ງຈາກຄະນະບໍລິຫານງານຂອງ ສຫໜ.

**ມາດຕາ 32 : ວ່າດ້ວຍການຈັດຕັ້ງບັນດາກອງປະຊຸມຂອງສະມາຄົມ ນັກທຸລະກິດໜຸ່ມແຫ່ງຊາດ**

ກອງປະຊຸມໃຫຍ່ແມ່ນການຈັດຕັ້ງສູງສຸດຂອງ ສຫໜ ກອງປະຊຸມຈະປະກອບດ້ວຍສະມາຊິກ ຫຼື ຕົວແທນສະມາຊິກທັງໝົດເຂົ້າຮ່ວມຢ່າງພ້ອມພຽງກັນ ກອງປະຊຸມໃຫຍ່ມີ 2 ປະເພດຄື:

1. ກອງປະຊຸມໃຫຍ່ສາມັນຂອງ ສຫໜ ຈະມີຂຶ້ນທຸກໆ 4 ປີ ໂດຍສະມາຊິກຈະຕັດສິນບາງບັນຫາເຊັ່ນ:
    - ຮັບຮອງເອົາບົດລາຍງານຂອງ ຄະນະບໍລິຫານງານສະໄໝຜ່ານມາ.
    - ຮັບຮອງເອົາໂຄງການຂອງຄະນະບໍລິຫານງານສະໄໝຕໍ່ໄປ.

- ອະນຸມັດແຜນງົບປະມານ.
- ເລືອກຕັ້ງຄະນະກຳມະການບໍລິຫານງານຂອງ ສທໜ ຊຸດໃໝ່.
- ເລືອກຕັ້ງຄະນະກຳມະການທີ່ປຶກສາຂອງ ສທໜ.
- ຄັດເລືອກຜູ້ກວດສອບບັນຊີຂອງ ສທໜ.
- ຮັບຮອງເອົາບັນດາສາຂາຂອງ ສທໜ ທັງພາຍໃນ ແລະ ຕ່າງປະເທດ.
- ຊົມເຊີຍສະມາຊິກຜູ້ທີ່ມີຜົນງານດີເດັ່ນ.
- ຊົມເຊີຍຜົນງານ ແລະ ສຳມະນາບຸນຄຸນໃຫ້ແກ່ບັນດາທີ່ປຶກສາກິດຕິມາສັກ, ທີ່ປຶກສາທັງຈາກພາຍໃນ ແລະ ຕ່າງປະເທດ.

2. ກອງປະຊຸມໃຫຍ່ວິສາມັນ

ແມ່ນກອງປະຊຸມທີ່ພິຈາລະນາທຸກບັນຫາຂອງ ສທໜ ແລະ ສາມາດຈັດຂຶ້ນໄດ້ໃນກໍລະນີເຊັ່ນ:

- ຄະນະບໍລິຫານງານຂອງ ສທໜ ເຫັນສົມຄວນທີ່ຈະເປີດກອງປະຊຸມ ເພື່ອການຮັບຮອງໂຄງການ ຫຼື ແກ້ໄຂບັນຫາໃດໜຶ່ງ ທີ່ອາດສ້າງຄວາມກະທົບຕໍ່ ສທໜ.
- ສະມາຊິກຫຼາຍກວ່າຂອງສະມາຊິກທັງໝົດ ຮ້ອງຂໍໃຫ້ເປີດກອງປະຊຸມ ສະເໜີຕໍ່ເລຂາທິການເປັນລາຍລັກອັກສອນ, ລະບຸຂໍ້ຄວາມ ແລະ ມູນເຫດຂອງກອງປະຊຸມຊັດເຈນ ແຈ້ງໃຫ້ຄະນະບໍລິຫານງານຊາບ ເພື່ອພິຈາລະນາ ແລະ ອະນຸມັດເປີດກອງປະຊຸມນັ້ນພາຍໃນ.

ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ. ນອກນັ້ນຍັງມີກອງປະຊຸມປະຈຳອື່ນໆທີ່ເປັນສ່ວນປະກອບຂອງການບໍລິຫານ ສທໜ.

**ມາດຕາ 33 : ກຳນົດກອງປະຊຸມ**

ກ່ອນການເປີດກອງປະຊຸມໃຫຍສາມັນ ສາມສິບ (30) ວັນ ຄະນະບໍລິຫານງານຕ້ອງປະກາດໝາຍກຳນົດຂອງກອງປະຊຸມ, ກຳນົດການລົງທະບຽນ, ວັນເວລາ ແລະ ສະຖານທີ່ໃຫ້ແກ່ສະມາຊິກຮັບຊາບ ລວມເຖິງເນື້ອໃນຂອງກອງປະຊຸມ ແລະ ເອກະສານທັງໝົດທີ່ໄດ້ລະບຸໄວ້ໃນກົດລະບຽບສະບັບນີ້. ສະມາຊິກທຸກຄົນຈະຕ້ອງໄດ້ຄົ້ນຄວ້າເອກະສານເຫຼົ່ານັ້ນ ປະກອບຄວາມເຫັນ ແລະ ນຳເອົາເອກະສານເຫຼົ່ານັ້ນມາຮ່ວມກອງປະຊຸມຕາມນັດໝາຍເພື່ອຮັບຮອງເອົາ.

**ມາດຕາ 34 : ການເລື່ອນກອງປະຊຸມ**

ບໍ່ວ່າໃນກໍລະນີໃດກໍຕາມ ຖ້າຫາກມີຄວາມຈຳເປັນຕ້ອງເລື່ອນເວລາກອງປະຊຸມ ຄະນະບໍລິຫານງານຕ້ອງແຈ້ງເຫດຜົນເປັນທາງການ ແລະ ນັດໝາຍກອງປະຊຸມຄືນໃໝ່ພາຍໃນ 07 ວັນ. ໃນການນັດ ໝາຍກອງປະຊຸມຄັ້ງທີ 2 ບໍ່ວ່າເງື່ອນໄຂຂອງກອງປະຊຸມຈະບໍ່ພຽງພໍກໍ່ຕາມ ກໍຖືວ່າກອງປະຊຸມນັ້ນໄດ້ລະບຸເງື່ອນໄຂ ສາມາດດຳເນີນກອງປະຊຸມໄດ້.

**ມາດຕາ 35 : ປະທານກອງປະຊຸມ**

ປະທານຄະນະກຳມະການບໍລິຫານຂອງ ສທໜ ນັ່ງເປັນປະທານກອງປະຊຸມໃຫຍ່ ຖ້າບໍ່ສາມາດນັ່ງເປັນປະທານກອງປະຊຸມໄດ້ໃຫ້ຮອງປະທານແທນ ແລະ ຖ້າບໍ່ຈຳເປັນກໍ່ສາມາດສະເໜີທີ່ປຶກສາປະຈຳ ຫຼື ເລືອກເອົາສະມາຊິກໃດໜຶ່ງຂຶ້ນເປັນປະທານກອງປະຊຸມໄດ້.

**ມາດຕາ 36 : ສິດອອກສຽງ**

ສະມາຊິກສາມັນ ແລະ ວິສາມັນເທົ່ານັ້ນ ມີສິດອອກສຽງເລືອກຕັ້ງໃນກອງປະຊຸມໃຫຍ່ສາມັນ ແລະ ມີສິດລົງຄະແນນສຽງພຽງສຽງດຽວເທົ່ານັ້ນ, ຕາງໜ້າສະມາຊິກສາມັນ ແລະ ວິສາມັນ ບໍ່ມີສິດອອກສຽງແທນ ນອກຈາກສະມາຊິກສາມັນ ແລະ ວິສາມັນຄົນນັ້ນໄດ້ອະນຸຍາດ ແລະ ແຕ່ງຕັ້ງຕົວແທນມາປ່ອນບັດລົງຄະແນນສຽງ ຕ້ອງປະຕິບັດແບບເປີດເຜີຍດ້ວຍວິທີການຍົກມື ແຕ່ບາງກໍລະນີທີ່ຈໍາເປັນ ກໍ່ສາມາດລົງຄະແນນສຽງແບບປິດລັບ ດ້ວຍວິທີການປ່ອນບັດໂດຍໄດ້ຮັບການເຫັນດີ ໃຫ້ປະຕິບັດຈາກສຽງສ່ວນຫຼາຍຂອງຄະນະກໍາມະການເລືອກຕັ້ງ ແລະ ສຽງສ່ວນຫຼາຍ 2/3 ຂອງສະມາຊິກທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

## ໝວດທີ VIII
## ວ່າດ້ວຍການຄຸ້ມຄອງການເງິນ ແລະ ຊັບສິນຂອງສະມາຄົມ ນັກທຸລະກິດໜຸ່ມແຫ່ງຊາດ

ສະມາຄົມນັກທຸລະກິດໜຸ່ມແຫ່ງຊາດ ເປັນການຈັດຕັ້ງສັງຄົມ ມີຖານະເປັນນິຕິບຸກຄົນ ມີງົບປະ ມານສະເພາະ ແລະ ເຄື່ອນໄຫວເປັນເອກະລາດດ້ານການເງິນ.

**ມາດຕາ 37 : ຕົ້ນທຶນ ແລະ ທຶນຈົດທະບຽນ**

ຕົ້ນທຶນຂອງ ສທໜ ໄດ້ມາຈາກການປະກອບສ່ວນຂອງສະມາຊິກ ແລະ ທຶນກູ້ຢືມຈາກລັດຖະບານ. ທຶນຈົດທະບຽນຂອງ ສທໜ ຈະຖືກກໍານົດຄືນໃໝ່ໃນທຸກສະໄໝກອງປະຊຸມໃຫຍ່ ເລືອກຕັ້ງຄະນະບໍລິຫານງານຊຸດໃໝ່ ໂດຍມີຈໍານວນຕໍ່າສຸດບໍ່ ຫຼຸດຈໍານວນເງິນຄ່າບໍາລຸງປະຈໍາປີ ຂອງສະມາຊິກ ຄູນຈໍານວນຂອງສະມາຊິກ ຄູນຈໍານວນປີການບໍລິຫານຂອງຄະນະບໍລິຫານຊຸດນັ້ນ ບວກກັບເງິນກູ້ທີ່ລັດຖະບານອະນຸມັດໃນແຕ່ລະງວດ.

**ມາດຕາ 38 : ລາຍຮັບຂອງສະມາຄົມ ນັກທຸລະກິດໜຸ່ມແຫ່ງຊາດ**

1. ຄ່າຈົດທະບຽນ ແລະ ເງິນບໍາລຸງຂອງສະມາຊິກ.
2. ລາຍຮັບຈາກການຈໍາໜ່າຍສິ່ງຜະລິດກ້ານການຂ່າວ ແລະ ການໂຄສະນາ, ໜັງສືພິມ, ວິທະຍຸ, ວາລະສານ ແລະ ໂທລະພາບ.
3. ລາຍຮັບຈາກການສໍາມະນາ ແລະ ການຝຶກອົບຮົມ.
4. ລາຍຮັບຈາກການໃຫ້ການບໍລິການທີ່ປຶກສາດ້ານກົດໝາຍ.
5. ລາຍຮັບຈາກບັນດາກິດຈະກໍາຕ່າງໆຂອງ ສທໜ.
6. ລາຍຮັບຈາກການໃຫ້ບໍລິການທີ່ປຶກສາເຕັກໂນໂລຊີ ແລະ ວິທີການຜະລິດການບໍລິການ.
7. ລາຍຮັບຈາກການໃຫ້ບໍລິການທີ່ປຶກສາການຕະຫຼາດ ແລະ ການໂຄສະນາ.
8. ລາຍຮັບຈາກການໃຫ້ບໍລິການທີ່ປຶກສາການຄ້າ ແລະ ການຈໍາໜ່າຍທັງຢູ່ພາຍໃນ ແລະ ຕ່າງປະເທດ.
9. ລາຍຮັບຈາກການໃຫ້ບໍລິການທີ່ປຶກສາທາງດ້ານການຫາແຫຼ່ງທຶນ.
10. ລາຍຮັບຈາກການໃຫ້ບໍລິການທີ່ປຶກສາການລົງທຶນ.
11. ລາຍຮັບຈາກການບໍລິຫານກອງທຶນ ໃຫ້ບໍລິການຄໍ້າປະກັນ ແລະ ອະນຸມັດເງິນກູ້, ເງິນກູ້ສໍາລັບການລົງທຶນ, ເງິນກູ້ສໍາລັບທຶນໝູນວຽນ, ເງິນກູ້ສໍາລັບຄໍ້າປະກັນໂຄງການ, ເງິນກູ້ສໍາລັບການສຶກສາ ແລະ ເງິນກູ້ອື່ນໆ ຕາມແຜນການພັດທະນາຂອງ ສທໜ.
12. ລາຍຮັບຈາກການວາງສະແດງສິນຄ້າ ແລະ ງານຕະຫຼາດນັດຂອງສະມາຊິກ ສທໜ.
13. ລາຍຮັບຈາກການໃຫ້ຂໍ້ມູນດ້ານຕ່າງໆທີ່ພົວພັນທຸລະກິດ.

14. ລາຍຮັບຈາກການໃຫ້ບໍລິຫານໂຄງການຂອງລັດຖະບານ, ອົງການຈັດຕັ້ງຕ່າງໆ ແລະ ຂອງກຸ່ມສະມາຊິກ ສທໜ ເອງ.
15. ລາຍຮັບຈາກການໃຫ້ເຊົ່າສະຖານທີ່ ຫຼື ໂຄງການ ທີ່ໄດ້ຮັບການມອບສິດນຳໃຊ້ຈາກລັດຖະ ບານ.
16. ລາຍຮັບຈາກການຮ່ວມມືກັບຕ່າງປະເທດ ໃນການປະຕິບັດໂຄງການຂອງ ສທໜ.
17. ການສະໜັບສະໜູນຈາກລັດຖະບານ.
18. ການສະໜັບສະໜູນຈາກອົງການຈັດຕັ້ງສາກົນ.
19. ລາຍຮັບຈາກການອອກໃບຫຸ້ນຂອງ ສທໜ.
20. ແຫຼ່ງລາຍຮັບອື່ນໆ.

**ມາດຕາ 39 : ລາຍຈ່າຍຂອງສະມາຄົມ ນັກທຸລະກິດໜຸ່ມແຫ່ງຊາດ**

1. ຄ່າບໍລິຫານງານ ແລະ ເງິນເດືອນຂອງພະນັກງານປະຈຳ ສທໜ.
2. ຄ່າເດີນທາງຂອງຄະນະ ສທໜ ໃນການເຄື່ອນໄຫວວຽກງານ.
3. ຄ່າຮັບຮອງແຂກ, ຈັດງານ, ຈັດກອງປະຊຸມ, ຈັດການວາງສະແດງ ແລະ ງານສັງສັນຕ່າງໆທີ່ຄະນະບໍລິຫານເຫັນຄວາມຈະເປັນ ແລະ ມີຄຸນປະໂຫຍດຕໍ່ ສທໜ.
4. ຄ່າທຳນຽມ, ຄ່າບຳລຸງເຂົ້າເປັນສະມາຊິກຂອງອົງການຈັດຕັ້ງຕ່າງໆພາຍໃນ ສປປ ລາວ ແລະ ການເຂົ້າເປັນສະມາຊິກອົງການຈັດຕັ້ງສາກົນອື່ນໆ ຕາມມະຕິຕົກລົງຂອງຄະນະບໍລິຫານງານ ໂດຍການເຫັນດີເຫັນພ້ອມຈາກລັດຖະບານ.
5. ຈ່າຍພັນທະຕໍ່ລັດຖະບານຕາມລະບຽບກົດໝາຍ.
6. ຈ່າຍຄ່າບໍລິການທີ່ປຶກສາການຄ້າ ແລະ ການຈຳໜ່າຍທັງຢູ່ພາຍໃນ ແລະ ຕ່າງປະເທດ.
7. ຈ່າຍຄ່າບໍລິການທີ່ປຶກສາທາງດ້ານການຫາແຫຼ່ງທຶນ.
8. ຈ່າຍຄ່າບໍລິຫານທີ່ປຶກສາການລົງທຶນ.
9. ຈ່າຍຄ່າການບໍລິຫານກອງທຶນ ໃຫ້ບໍລິການຄ້ຳປະກັນ ແລະ ອະນຸມັດເງິນກູ້, ເງິນກູ້ສຳລັບການລົງທຶນ, ເງິນກູ້ສຳລັບທຶນໝູນວຽນ, ເງິນກູ້ສຳລັບຄ້ຳປະກັນໂຄງການ, ເງິນກູ້ສຳລັບການສຶກສາ ແລະ ເງິນກູ້ອື່ນໆ ຕາມແຜນການພັດທະນາຂອງ ສທໜ ໃຫ້ແກ່ທະນາຄານ ແລະ ພາກສ່ວນທີ່ກ່ຽວຂ້ອງ.
10. ຈ່າຍຄ່າວາງສະແດງສິນຄ້າ ແລະ ງານຕະຫຼາດນັດຂອງສະມາຊິກ ສທໜ.
11. ຈ່າຍຄ່າສ້າງຖານຂໍ້ມູນດ້ານຕ່າງໆທີ່ພົວພັນທຸລະກິດ.
12. ຈ່າຍຄ່າບໍລິຫານໂຄງການຂອງລັດຖະບານ, ອົງການຈັດຕັ້ງຕ່າງໆ ແລະ ຂອງກຸ່ມສະມາຊິກ ສທໜ ເອງ.
13. ຈ່າຍຄ່າຄຸ້ມຄອງສະຖານທີ່ ຫຼື ໂຄງການທີ່ໄດ້ຮັບມອບສິດນຳໃຊ້ຈາກລັດຖະບານ.
14. ຈ່າຍຄ່າບໍລິຫານໂຄງການຮ່ວມມືກັບຕ່າງປະເທດ.
15. ຈ່າຍຄ່າຄຸ້ມຄອງບໍລິຫານກອງທຶນຂອງ ສທໜ.
16. ຈ່າຍຄ່າໃນວຽກງານໂຄສະນາ ແລະ ອື່ນໆ.
17. ຈ່າຍຄ່າໃນການສ້າງບຸກຄະລາກອນ.
18. ຈ່າມຄ່າອຸປະໂພກ, ບໍລິໂພກໃນງານບໍລິຫານ ສທໜ.
19. ຈ່າຍຄ່າດຳເນີນໂຄງການສະເພາະຂອງ ສທໜ ທີ່ຖືກຮັບຮອງ.
20. ຈ່າຍຄ່າບຳລຸງ ແລະ ຄ່າກວດສອບບັນຊີຂອງ ສທໜ.
21. ຈ່າຍຄ່າອື່ນໆຕາມຄຳສັ່ງຂອງຄະນະບໍລິຫານ.
22. ລາຍຈ່າຍຈາກການຄຸ້ມຄອງບໍລິຫານ, ບໍລິສັດຂອງ ສທໜ.

**ມາດຕາ 40 : ບົດສະຫຼຸບປະຈຳປີ**

ຄະນະບໍລິຫານງານ ສທໜ ຈະຕ້ອງສົ່ງບົດສະຫຼຸບການເຄື່ອນໄຫວໃນປີທີ່ຜ່ານມາ ແລະ ແຜນງົບປະມານໃນສົກໜ້າໃຫ້ຄະນະກວດສອບຮັບຊາບ 30 ວັນກ່ອນກອງປະຊຸມປະຈຳປີ ແລະ ການຖືເອົາວັນທີ 31 ທັນວາຂອງທຸກໆປີ ເປັນມື້ສິ້ນສຸດການບັນຊີຂອງ ສທໜ.

**ມາດຕາ 41 : ການກວດສອບບັນຊີ**

ຄະນະກວດສອບມີໜ້າທີ່ກວດສອບບັນຊີ ແລະ ເອກະສານທຸກສະບັບທີ່ກ່ຽວຂ້ອງກັບການບັນຊີ ທັງລາຍຮັບ ແລະ ລາຍຈ່າຍຂອງ ສທໜ. ຜູ້ກວດສອບມີສິດຂໍຄຳປຶກສາຈາກທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ໃນກໍລະນີຈຳເປັນກໍ່ມີສິດວ່າຈ້າງຜູ້ກວດສອບເອກະລາດມາກວດສອບບັນຊີໄດ້ ແຕ່ຕ້ອງສະເໜີລາຍຊື່ບຸກຄົນ ຫຼື ນິຕິບຸກຄົນ ທີ່ຈະມາເຮັດໜ້າທີ່ກວດສອບນັ້ນ ໃຫ້ຄະນະບໍລິຫານງານຮັບຊາບ ແລະ ຕ້ອງເປັນພາກສ່ວນທີ່ຖືກຍອມຮັບ ແລະ ຖືກຕ້ອງຕາມກົດໝາຍ.

**ມາດຕາ 42 : ການອະນຸມັດຈ່າຍ**

ການອະນຸມັດຈ່າຍ ຈະຕ້ອງເປັນໄປໃນຫຼັກການຖືກຮັບຮອງ ແຜນການຈາກຄະນະບໍລິຫານຄືບຄະນະໃນກອງປະຊຸມປະຈຳປີ ແລະ ກວດສອບຄືນ ຖ້າຖືກດັດແກ້ໃຫ້ແທດເໝາະກັບສະພາບໃນກອງປະຊຸມປະຈຳເດືອນ ແລະ ໃດມາດການສັ່ງຈ່າຍຄັງເງິນສົດ ມີລະບຽບການລະອຽດໄວ້ຕ່າງຫາກ, ປະທານ ສທໜ ມີສິດສັ່ງຈ່າຍເງິນນອກແຜນການບໍ່ເກີນຂອບເຂດ 2.000.000 ກີບ ສຳລັບໜຶ່ງລາຍເຊັນ. ລາຍຈ່າຍນອກແຜນທີ່ເກີນ 2.000.000 ກີບ ຈະຕ້ອງໄດ້ຜ່ານການເຫັນດີຈາກຄະນະບໍລິຫານງານ ຢ່າງໜ້ອຍຂອງສະມາຊິກບໍລິຫານ.

## ໝວດທີ IX ຂໍ້ຂັດແຍ່ງ

**ມາດຕາ 43 : ຂໍ້ຂັດແຍ່ງ**

ຖ້າມີຂໍ້ຂັດແຍ່ງເກີດຂຶ້ນຈາກການປະຕິບັດລະບຽບສະບັບນີ້ ໃຫ້ປະທານສະເໜີເຂົ້າກອງປະຊຸມໃຫຍ່ ເພື່ອພິຈາລະນາແກ້ໄຂ. ການແກ້ໄຂ, ດັດແປງ, ຕັດອອກ ຫຼື ເພີ່ມຂຶ້ນ ເຂົ້າບາງຂໍ້ກຳນົດກົດລະບຽບ ຈະຕ້ອງໃຊ້ມາດຕະການມະຕິຕົກລົງ ຂອງກອງປະຊຸມໃຫຍ່ໂດຍໃຫ້ຖືເອົາສຽງສ່ວນຫຼາຍ ຂອງຄະນະບໍລິຫານງານທີ່ເຂົ້າຮ່ວມເປັນການຕັດສິນ.

## ໝວດທີ X
## ການຍ້ອງຍໍ ແລະ ປະຕິບັດອື່ນໆ

**ມາດຕາ 44 : ວ່າດ້ວຍການຍ້ອງຍໍສະມາຊິກສະມາຄົມ ນັກທຸລະກິດໜຸ່ມແຫ່ງຊາດ**

ຜູ້ມີຜົນງານດີເດັ່ນໃນການພັດທະນາເຢົາວະຊົນ ພັດທະນາເສດຖະກິດ-ສັງຄົມຂອງຊາດ ແມ່ນຈະໄດ້ຮັບການຍ້ອງຍໍສັນລະເສີນຈາກ ຊປປລ ແລະ ສະເໜີໃຫ້ ຊປປລ ນຳສະເໜີການຍ້ອງຍໍຈາກພັກ-ລັດຖະບານຕາມຄວາມເໝາະສົມ.

## ໝວດທີ XI
## ບົດບັນຍັດສຸດທ້າຍການຍຸບເລີກ

**ມາດຕາ 45 : ການຍຸບເລີກ ອົງການຈັດຕັ້ງສະມາຄົມ ນັກທຸລະກິດໜຸ່ມແຫ່ງຊາດ**

ສທໜ ຈະຖືກຍຸບເລີກກໍ່ຕໍ່ເມື່ອມີມະຕິຕົກລົງຂອງສະມາຊິກຫຼາຍກວ່າ 2/3 ຂອງສະມາຊິກສາມັນ ແລະ ວິສາມັນເຫັນດີ, ເມື່ອໄດ້ຮັບວິກິດການທາງດ້ານການເງິນ ແລະ ເມື່ອລັດຖະບານທາກອະນຸຍາດ ຫຼື ສັ່ງຍຸບເລີກດ້ວຍເຫດຜົນໃດກໍຕາມ. ເມື່ອຍຸບເລີກຕ້ອງມີການສະສາງບັນຊີ ແລະ ມອບສັບສິນທັງໝົດ ໃຫ້ແກ່ສາທາລະນະຊົນໃດໜຶ່ງ ເພື່ອຜົນປະໂຫຍດສ່ວນລວມຂອງສັງຄົມ.

ກົດລະບຽບນີ້ ເປັນກົດລະບຽບສະບັບປັບປຸງໃໝ່ໃນປີ 2013, ມີຜົນສັກສິດນັບຕັ້ງແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

## ໝວດທີ XII
## ຂອບເຂດການນຳໃຊ້ ແລະ ຜົນສັກສິດຂອງລະບຽບສະມາຄົມ ນັກທຸລະກິດໜຸ່ມແຫ່ງຊາດ

**ມາດຕາ 46 : ຂອບເຂດການນຳໃຊ້**

ລະບຽບສະບັບນີ້ມີສິດ ແລະ ນຳໃຊ້ເຂົ້າໃນວຽກງານການຄຸ້ມຄອງບໍລິຫານຂອງ ສທໜ ແລະ ສະມາຊິກຂອງ ສທໜ ທົ່ວປະເທດ.

**ມາດຕາ 47 : ກົດລະບຽບສະບັບນີ້ ມີຜົນສັກສິດຕັ້ງແຕ່ມື້ລົງລາຍເຊັນເປັນຕົ້ນໄປ.**

ນະຄອນຫຼວງວຽງຈັນ, ວັນທີ 12/11/2019.

**ກຳມະການຄະນະບໍລິຫານງານ ສຊປລ**
**ປະທານສະມາຄົມນັກທຸລະກິດໜຸ່ມແຫ່ງຊາດລາວ**

ປອ ຄຳແສນ ສິລະວົງ
Dr. Khamsen S...